ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*************

ກະຊວງການເງິນ

ກົມພາສີ

00097

ເລກທີ................./ກພສ

ນະຄອນຫຼວງວຽງຈັນ, ວັນທີ 06 JAN 2017

# ບົດແນະນຳ

## ກ່ຽວກັບການແຈ້ງພາສີເປັນລາຍລະອຽດດ້ວຍລະບົບເອເລັກໂຕຣນິກ

- ອີງຕາມກົດໝາຍວ່າດ້ວຍພາສີສະບັບເລກທີ 04/ສພຊ, ລົງວັນທີ 20ທັນວາ 2011 ແລະກົດໝາຍວ່າດ້ວຍ ພາສີ ສະບັບປັບປຸງບາງມາດຕາ ເລກທີ 57/ສພຊ, ລົງວັນທີ 24ທັນວາ 2014;
- ອີງຕາມຂໍ້ຕົກລົງກະຊວງການເງິນ ສະບັບເລກທີ 1765/ກງ, ລົງວັນທີ 03 ມິຖຸນາ 2015 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ;
- ອີງຕາມ ບົດແນະນຳກະຊວງການເງິນ ສະບັບເລກທີ 1559/ກງ, ລົງວັນທີ 24 ພຶດສະພາ 2016 ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ;

ການນຳເຂົ້າ ແລະ ການສົ່ງອອກຜ່ານດ່ານພາສີຊາຍແດນ ລວມທັງການຂົນສົ່ງສິນຄ້າຜ່ານແດນ ໃນຂອບເຂດທົ່ວປະເທດ ຕ້ອງແຈ້ງຕໍ່ລັດຖະການພາສີເພື່ອການຄວບຄຸມກວດກາໃນລະດັບທີ່ເໝາະສົມ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີຢ່າງຖືກຕ້ອງ ໂດຍສະເພາະແມ່ນການປົກປ້ອງຜົນປະໂຫຍດອັນຊອບທຳທາງດ້ານເສດຖະກິດ-ສັງຄົມ, ການສົ່ງເສີມການແຂ່ງຂັນທາງການຄ້າທີ່ເປັນທຳ, ການຍົກສູງການອຳນວຍຄວາມສະດວກທາງດ້ານການຄ້າ, ການເຊື່ອມໂຍງກັບສາກົນ ແລະ ການຈັດເກັບລາຍຮັບເຂົ້າງົບປະມານຢ່າງຄົບຖ້ວນ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

## ຫົວໜ້າກົມພາສີ ອອກບົດແນະນຳ:

**1. ຈຸດປະສົງ**

ບົດແນະນຳສະບັບນີ້ ກຳນົດຫຼັກການ, ຂັ້ນຕອນ, ວິທີການ ແລະ ມາດຕະການ ໃນການແຈ້ງພາສີເປັນລາຍລະອຽດດ້ວຍລະບົບເອເລັກໂຕຣນິກ ເປັນການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍພາສີ ແລະ ບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ, ເພື່ອຮັບປະກັນໃຫ້ການແຈ້ງພາສີມີຄວາມສະດວກວ່ອງໄວ, ໂປ່ງໃສ ແລະ ໜ້າເຊື່ອຖື ແນໃສ່ເພີ່ມທະວີການອຳນວຍຄວາມສະດວກທາງດ້ານການຄ້າ, ຮັບປະກັນການຈັດເກັບລາຍຮັບເຂົ້າງົບປະມານ, ຫັນລະບຽບການແຈ້ງພາສີໄປສູ່ຄວາມເປັນທັນສະໄໝ ແລະ ສອດຄ່ອງກັບມາດຕະຖານ ແລະ ລະບຽບການສາກົນ ເທື່ອລະກ້າວ.

## 2. ຫຼັກການທົ່ວໄປ

- ລັດຖະການພາສີ ນຳໃຊ້ລະບົບເອເລັກໂຕຣນິກ(ລະບົບອາຊີກູດາ) ເຂົ້າໃນການຄຸ້ມຄອງການແຈ້ງພາສີ ເພື່ອຍົກສູງປະສິດທິພາບ ແລະ ປະສິດທິຜົນ ການຄຸ້ມຄອງການແຈ້ງພາສີ, ຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍໃນການດຳເນີນຂັ້ນຕອນການແຈ້ງພາສີ, ຫຼຸດຜ່ອນການນຳໃຊ້ເຈ້ຍ ແລະ ເພີ່ມທະວີຄວາມຖືກຕ້ອງ, ຊັດເຈນຂອງການແຈ້ງພາສີ.
- ລັດຖະການພາສີ ນຳໃຊ້ກົນໄກການບໍລິຫານຄວາມສ່ຽງທີ່ມີລັກສະນະວິທະຍາສາດ ເຂົ້າໃນການຄຸ້ມຄອງການແຈ້ງພາສີ ເພື່ອເພີ່ມທະວີການອຳນວຍຄວາມສະດວກໃຫ້ແກ່ການຄ້າທີ່ຖືກຕ້ອງຊອບທຳ ແລະ ເພີ່ມມາດຕະການເຂັ້ມງວດໃນການຄວບຄຸມການຄ້າທີ່ມີຄວາມສ່ຽງສູງຕໍ່ການລັກລອບ ຫຼື ຫຼົບຫຼີກການກວດກາຂອງເຈົ້າໜ້າທີ່.
- ລັດຖະການພາສີ ເປັນເຈົ້າການຮ່ວມມືກັບຂະແໜງການຂອງລັດ ແລະ ພາກເອກະຊົນ ໃນການພັດທະນາເຄື່ອງມືທັນສະໄໝ ເຂົ້າໃນການແຈ້ງພາສີໃຫ້ກ້າວໄປສູ່ຄວາມເປັນມາດຕະຖານສາກົນ.
- ລັດຖະການພາສີ ສົ່ງເສີມການມີສ່ວນຮ່ວມຂອງພາກຜູ້ປະກອບການໃນຂະບວນການແຈ້ງພາສີ ລວມທັງການປັບປຸງຂັ້ນຕອນການແຈ້ງພາສີ ເພື່ອຮັບປະກັນຄວາມໂປ່ງໃສ, ວ່ອງໄວ ແລະ ຍົກສູງຂີດຄວາມສາມາດໃນການແຂ່ງຂັນໃນຕະຫຼາດພາກພື້ນ ແລະ ສາກົນ.

## 3. ອະທິບາຍຄຳສັບ

- **ການແຈ້ງພາສີຂາເຂົ້າ**: ໝາຍເຖິງດຳເນີນການແຈ້ງພາສີ ເພື່ອນຳເອົາສິນຄ້າເຂົ້າມາໃນອານາເຂດພາສີ ຂອງ ສປປ ລາວ ເພື່ອຈຸດປະສົງການຊົມໃຊ້ພາຍໃນ, ນຳເຂົ້າຊົ່ວຄາວ, ນຳເຂົ້າຄືນ, ນຳເຂົ້າໃນລະບອບສາງ, ນຳເຂົ້າເຄື່ອນຍ້າຍພາຍໃນ, ນຳເຂົ້າຜ່ານແດນສາກົນ ຫຼື ການນຳເຂົ້າໃນລະບອບອື່ນໆ.
- **ການແຈ້ງພາສີຂາອອກ**: ໝາຍເຖິງດຳເນີນການແຈ້ງພາສີ ເພື່ອນຳເອົາສິນຄ້າອອກຈາກອານາເຂດພາສີ ຂອງ ສປປ ລາວ ເພື່ອຈຸດປະສົງສົ່ງອອກຖາວອນ, ສົ່ງອອກຊົ່ວຄາວ, ສົ່ງອອກຜ່ານແດນສາກົນ, ການສົ່ງອອກຄືນ ຫຼື ການສົ່ງອອກໃນລະບອບອື່ນໆ.
- **ການກວດກາຂໍ້ມູນ ແລະ ເອກະສານ**: ໝາຍເຖິງການກວດກາຂໍ້ມູນທີ່ລະບຸໃນໃບແຈ້ງພາສີ ແລະ ການກວດກາບັນດາເອກະສານປະກອບການແຈ້ງພາສີ ເຊັ່ນ: ໃບແຈ້ງລາຄາ, ໃບລາຍການຫຸ້ມຫໍ່, ໃບຢັ້ງຢືນແຫຼ່ງກຳເນີດ, ໃບອະນຸຍາດ ແລະ ອື່ນໆ ໂດຍເຈົ້າໜ້າທີ່ພາສີ.
- **ການກວດກາສິນຄ້າຕົວຈິງ**: ໝາຍເຖິງການດຳເນີນການກວດກາສິນຄ້າຕົວຈິງ ຢູ່ສາງສິນຄ້າ ຫຼື ສະຖານທີ່ພັກສິນຄ້າທີ່ລັດຖະການພາສີກຳນົດ; ເຈົ້າໜ້າທີ່ພາສີ ນຳໃຊ້ເຄື່ອງມືທັນສະໄໝເຂົ້າໃນການກວດກາສິນຄ້າ ເຊັ່ນ: ເຄື່ອງສາຍແສງ (X-Ray Machine), ຊິງຊັ່ງນໍ້າໜັກ ແລະ ອື່ນໆ ໂດຍອີງໃສ່ຄວາມເໝາະສົມດ້ານລັກສະນະທາງກາຍະພາບ ແລະ ວິທີການຫຸ້ມຫໍ່ສິນຄ້າປະເພດຕ່າງໆ.
- **ຜູ້ແຈ້ງພາສີ**: ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນການປະກອບຂໍ້ມູນ ແລະ ເອກະສານແຈ້ງພາສີ, ລົງລາຍເຊັນໃນໃບແຈ້ງພາສີເປັນລາຍລະອຽດ, ຊຳລະຄ່າພາສີ-ພັນທະອື່ນ ແລະ ນຳສິນຄ້າອອກຈາກດ່ານພາສີຊາຍແດນ. ຜູ້ແຈ້ງພາສີ ອາດແມ່ນເຈົ້າຂອງສິນຄ້າ, ຜູ້ບໍລິການແຈ້ງພາສີ, ຜູ້ບໍລິການຂົນສົ່ງສິນຄ້າ, ຜູ້ບໍລິການຈັດສົ່ງສິນຄ້າ, ຜູ້ຮັບສິນຄ້າ, ຜູ້ສົ່ງສິນຄ້າ ຫຼື ຕົວແທນເຈົ້າຂອງສິນຄ້າ ທີ່ໄດ້ຮັບອະນຸຍາດດຳເນີນການແຈ້ງພາສີຢ່າງຖືກຕ້ອງຕາມກົດໝາຍ.

- **ຜູ້ບໍລິການແຈ້ງພາສີ:** ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນການປະກອບຂໍ້ມູນ ແລະ ເອກະສານແຈ້ງພາສີ, ລົງລາຍເຊັນໃນໃບແຈ້ງພາສີເປັນລາຍລະອຽດ ແລະ ຊຳລະຄ່າພາສີ-ພັນທະອື່ນ ແທນເຈົ້າຂອງສິນຄ້າ ຫຼື ຜູ້ນຳເຂົ້າ-ສົ່ງອອກສິນຄ້າ. ໂດຍມີການມອບສິດຈາກເຈົ້າຂອງສິນຄ້າຢ່າງເປັນລາຍລັກອັກສອນ ແລະ ມີຜົນບັງຄັບໃຊ້ທາງດ້ານກົດໝາຍ.
- **ໃບຂົນສົ່ງສິນຄ້າ:** ໝາຍເຖິງເອກະສານກຳກັບການຂົນສົ່ງສິນຄ້າ ທີ່ອອກໂດຍຜູ້ຂົນສົ່ງ ຫຼື ຜູ້ບໍລິການຈັດສົ່ງສິນຄ້າ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເຊິ່ງປະກອບດ້ວຍຂໍ້ມູນກ່ຽວກັບການຂົນສົ່ງສິນຄ້າ ເຊັ່ນ: ຜູ້ສົ່ງ, ຜູ້ຮັບ, ຮູບແບບການຂົນສົ່ງ, ວັນທີການຂົນສົ່ງ-ເຄື່ອນຍ້າຍ, ປະເພດສິນຄ້າ, ນ້ຳໜັກ, ຈຳນວນ ເຫຼົ່ານີ້ເປັນຕົ້ນ. ໃບຂົນສົ່ງສິນຄ້າ ລວມເອົາ: ໃບ Bill of Lading, ໃບ Airway Bill, ເອກະສານ Manifest (Master Bill or House Bill), Carrier's Report(ໃບ ສບ) ແລະ ອື່ນໆ ທີ່ນຳໃຊ້ທົ່ວໄປໃນລະບົບການຂົນສົ່ງສິນຄ້າສາກົນ.
- **ໃບແຈ້ງພາສີເປັນລາຍລະອຽດ:** ໝາຍເຖິງໃບແຈ້ງພາສີລະບົບເອກະສານອາຊຽນ (ASEAN Customs Declaration Document-ACDD) ທີ່ ສປປ ລາວ ໄດ້ຮັບຮອງ ແລະ ຈັດຕັ້ງປະຕິບັດ. ກົມພາສີ ເປັນຜູ້ຄຸ້ມຄອງການຈັດພິມ ແລະ ຈຳໜ່າຍແບບຟອມໃບແຈ້ງພາສີເປັນລາຍລະອຽດ.
- **ໃບແຈ້ງລາຄາ(ໃບອິນວອຍ):** ໝາຍເຖິງເອກະສານຢັ້ງຢືນດ້ານການຄ້າ ທີ່ຜູ້ຂາຍສິນຄ້າ ອອກໃຫ້ແກ່ຜູ້ຊື້ເພື່ອຢັ້ງຢືນການແລກປ່ຽນຊື້ຂາຍສິນຄ້າ. ໃບແຈ້ງລາຄາ ຕ້ອງປະກອບດ້ວຍຂໍ້ມູນຕົ້ນຕໍ ຄື: ຊື່ ແລະ ທີ່ຢູ່ຜູ້ຊື້, ຊື່ ແລະ ທີ່ຢູ່ຜູ້ຂາຍ, ລາຍການສິນຄ້າ, ລາຍລະອຽດສິນຄ້າ, ຈຳນວນ, ລາຄາ(ຕໍ່ຫົວໜ່ວຍ), ມູນຄ່າທັງໝົດ, ຄ່າບໍລິການຕິດພັນ ແລະ ອື່ນໆ.
- **ໃບລາຍການຫຸ້ມຫໍ່ສິນຄ້າ:** ໝາຍເຖິງເອກະສານກຳກັບການຫຸ້ມຫໍ່ ຫຼື ການບັນຈຸສິນຄ້າໃສ່ພາຫະນະຂົນສົ່ງ ເຊິ່ງອອກໃຫ້ໂດຍຜູ້ສົ່ງອອກ, ຜູ້ບໍລິການຂົນສົ່ງ ຫຼື ພາກສ່ວນທີ່ກ່ຽວຂ້ອງ. ໃບລາຍການຫຸ້ມຫໍ່ສິນຄ້າ ປະກອບດ້ວຍຂໍ້ມູນສຳຄັນ ຄື: ຊື່ ແລະ ທີ່ຢູ່ຜູ້ຊື້, ຊື່ ແລະ ທີ່ຢູ່ຜູ້ຂາຍ, ລາຍການສິນຄ້າ, ວິທີການຫຸ້ມຫໍ່ເພື່ອຂົນສົ່ງ (ເປັນກັບ, ເປັນກ່ອງ, ເປັນແກັດ, ເປັນພາເລດ, ເປັນເຕົ້າ, ເປັນຊຸດ, ເປັນຂວດ, ອື່ນໆ....), ນ້ຳໜັກ, ຈຳນວນ ແລະ ອື່ນໆ.
- **ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ:** ໝາຍເຖິງເອກະສານທີ່ຂະແໜງຂອງລັດ, ສະພາການຄ້າ ຫຼື ຜູ້ສົ່ງອອກ (ກໍລະນີເປັນການຢັ້ງຢືນແຫຼ່ງກາເນີດດ້ວຍຕົນເອງ) ອອກໃຫ້ແກ່ຜູ້ນາເຂົ້າເພື່ອຢັ້ງຢືນປະເທດ ຫຼື ຂົງເຂດທີ່ເປັນແຫຼ່ງກຳເນີດຂອງສິນຄ້າ ຕາມເງື່ອນໄຂທີ່ໄດ້ກຳນົດໃນສັນຍາການຄ້າເສລີກອບຕ່າງໆ ທີ່ ສປປ ລາວ ເຂົ້າເປັນພາຄີ.
- **ໃບອະນຸຍາດ ຫຼື ໃບຢັ້ງຢືນ ຂອງຂະແໜງການລັດທີ່ກ່ຽວຂ້ອງ:** ໝາຍເຖິງເອກະສານທີ່ຂະແໜງການລັດອອກໃຫ້ ເພື່ອອະນຸຍາດໃຫ້ດຳເນີນການສົ່ງອອກ, ນຳເຂົ້າ ຫຼື ຂົນສົ່ງສິນຄ້າຜ່ານແດນ ສຳລັບສິນຄ້າປະເພດລັດຄວບຄຸມ. ໃບອະນຸຍາດຈາກຂະແໜງການລັດທີ່ກ່ຽວຂ້ອງ ລວມມີ ໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກ, ໃບຢັ້ງຢືນດ້ານເຕັກນິກ, ໃບຢັ້ງຢືນດ້ານຄຸນນະພາບ, ໃບຢັ້ງຢືນດ້ານສຸຂະອະນາໄມ, ໃບຢັ້ງຢືນດ້ານຄວາມປອດໄພ ແລະ ອື່ນໆ.
- **ການບໍລິຫານຄວາມສ່ຽງ:** ໝາຍເຖິງກົນໄກການເລືອກເຟັ້ນສຳລັບການປະຕິບັດມາດຕະການຄວບຄຸມສິນຄ້າ ຂອງລັດຖະການພາສີ ເພື່ອຈຸດປະສົງເພີ່ມທະວີການອຳນວຍຄວາມສະດວກ ແລະ ຍົກສູງ

ປະສິດທິພາບໃນການກວດກາສິນຄ້າຂອງເຈົ້າໜ້າທີ່ພາສີ. ລັດຖະການພາສີ ກຳນົດຄວາມສ່ຽງໃນການຄຸ້ມຄອງການແຈ້ງພາສີ 3 ລະດັບ ຄື: ຄວາມສ່ຽງຕໍ່າ, ຄວາມສ່ຽງປານກາງ ແລະ ຄວາມສ່ຽງສູງ. ລັດຖະການພາສີ ດຳເນີນມາດຕະການຄວບຄຸມກວດກາການແຈ້ງພາສີຕາມລະດັບຄວາມສ່ຽງຕາມຄວາມເໝາະສົມ.

- **ການແຈ້ງພາສີລ່ວງໜ້າ**: ໝາຍເຖິງການປະກອບຂໍ້ມູນ ແລະ ເອກະສານແຈ້ງພາສີເປັນລາຍລະອຽດ ແລະ ຍື່ນໃຫ້ເຈົ້າໜ້າທີ່ພາສີດຳເນີນການກວດກາຂໍ້ມູນ ແລະ ເອກະສານດັ່ງກ່າວກ່ອນສິນຄ້າມາຮອດດ່ານພາສີຊາຍແດນບ່ອນທີ່ຈະດຳເນີນການນຳເຂົ້າ ຫຼື ສົ່ງອອກ.
- **ລະບົບອາຊີກຸດາ**: ໝາຍເຖິງລະບົບຄຸ້ມຄອງຂໍ້ມູນການແຈ້ງພາສີແບບເອເລັກໂຕຣນິກ (Automated System for Customs Data – ASYCUDA World) ທີ່ລັດຖະການພາສີນຳໃຊ້ເຂົ້າໃນການຄຸ້ມຄອງການແຈ້ງພາສີ, ເກັບກຳສະຖິຕິ, ຄຸ້ມຄອງຖານຂໍ້ມູນລາຄາ, ຄຸ້ມຄອງດ້ານບັນຊີ ແລະ ເຊື່ອມໂຍງເຂົ້າກັບລະບົບບໍລິການອື່ນໆ.
- **ລະບົບ Smart Tax**: ໝາຍເຖິງລະບົບຊຳລະຄ່າພາສີ-ພັນທະອື່ນ ຜ່ານບັນຊີທະນາຄານແບບອັດຕະໂນມັດ ເຊິ່ງພັດທະນາໂດຍ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທີ່ເຊື່ອມໂຍງແລກປ່ຽນຂໍ້ມູນກັບລະບົບອາຊີກຸດາຂອງກົມພາສີ ແລະ ລະບົບ GFIS ຂອງຄັງເງິນແຫ່ງຊາດ.

## 4. ຂອບເຂດການນຳໃຊ້

ບົດແນະນຳສະບັບນີ້ ນຳໃຊ້ສຳລັບການດຳເນີນຂັ້ນຕອນການແຈ້ງພາສີ ໃນການນຳເຂົ້າ, ສົ່ງອອກ ແລະ ຂົນສົ່ງສິນຄ້າຜ່ານແດນ ທຸກປະເພດ ແລະ ຈັດຕັ້ງປະຕິບັດເປັນເອກະພາບໃນຂອບເຂດທົ່ວປະເທດ, ແຕ່ບໍ່ລວມເອົາການແຈ້ງສິນຄ້າຍ່ອຍ, ການແຈ້ງເຄື່ອງຕິດຕົວຜູ້ໂດຍສານ, ການແຈ້ງພາຫະນະນຳເຂົ້າ-ນຳອອກ ເພື່ອການທ່ອງທ່ຽວຢ້ຽມຢາມ ແລະ ການແຈ້ງສິນຄ້າສົ່ງທາງໄປສະນີ. ກົມພາສີຈະສ້າງນິຕິກຳກ່ຽວກັບການການຄຸ້ມຄອງການແຈ້ງພາສີສິນຄ້າຍ່ອຍ, ການແຈ້ງເຄື່ອງຕິດຕົວຜູ້ໂດຍສານ, ການແຈ້ງພາຫະນະນຳເຂົ້າ-ນຳອອກ ເພື່ອການທ່ອງທ່ຽວຢ້ຽມຢາມ ແລະ ການແຈ້ງສິນຄ້າສົ່ງທາງໄປສະນີ ເປັນອັນສະເພາະ.

## 5. ສະຖານທີ່ແຈ້ງພາສີ ແລະ ກວດປ່ອຍສິນຄ້າ

ການແຈ້ງພາສີເພື່ອການນຳເຂົ້າ, ສົ່ງອອກສິນຄ້າ ແລະ ຂົນສົ່ງສິນຄ້າຜ່ານແດນ ຕ້ອງດຳເນີນການຢູ່ບັນດາດ່ານພາສີຊາຍແດນ, ສາງພັກສິນຄ້າ ຫຼື ສາງສິນຄ້າທ່າບົກ(Inland Depot) ທີ່ລັດຖະການພາສີກຳນົດ. ຜູ້ປະກອບການທີ່ໄດ້ຕິດຕັ້ງລະບົບອາຊີກຸດາຢູ່ຫ້ອງການຂອງຕົນເອງ (Director Trade Input - DTI) ແລະ/ຫຼື ໄດ້ລົງທະບຽນແຈ້ງພາສີຜ່ານອິນເຕີເນັດ ແມ່ນສາມາດດຳເນີນການປະກອບຂໍ້ມູນການແຈ້ງພາສີ ຢູ່ຫ້ອງການຕົນເອງ ຫຼື ສາຖານທີ່ທີ່ມີລະບົບເຊື່ອມໂຍງເຂົ້າກັບລະບົບອາຊີກຸດາຂອງກົມພາສີ.

ການກວດປ່ອຍສິນຄ້າ ຕ້ອງດຳເນີນການຢູ່ດ່ານພາສີຊາຍແດນ, ສາງພັກສິນຄ້າປະຈຳດ່ານພາສີຊາຍແດນ, ສາງສິນຄ້າທ່າບົກ (Inland Depot) ແລະ ສະຖານທີ່ອື່ນ ທີ່ລັດຖະການພາສີກຳນົດ.

## 6. ເວລາບໍລິການແຈ້ງພາສີ

ລັດຖະການພາສີ ເປີດໃຫ້ດຳເນີນການແຈ້ງພາສີ ແລະ ກວດປ່ອຍສິນຄ້າ ຢູ່ດ່ານພາສີຊາຍແດນ ຕາມວັນ ແລະ ເວລາ ເຮັດວຽກທາງລັດຖະການທົ່ວໄປຄື: ຕອນເຊົ້າ 08:00 ໂມງ ຫາ 12:00 ໂມງ ແລະ ຕອນແລງ 13:00 ໂມງ ຫາ 16:00 ໂມງ ໃນວັນຈັນ ຫາ ວັນສຸກ.

ລັດຖະການພາສີ ສາມາດກຳນົດເວລາສຳລັບການດຳເນີນການແຈ້ງພາສີ ນອກຈາກວັນ ແລະ ເວລາທີ່ໄດ້ກຳນົດສຳລັບລັດຖະການທົ່ວໄປ ໂດຍອີງໃສ່ປະລິມານການຈໍລະຈອນສິນຄ້າຜ່ານດ່ານຊາຍແດນ ແລະ ການຕົກລົງເຫັນດີ ຮ່ວມກັບ ລັດຖະການພາສີຂອງປະເທດຄູ່ຮ່ວມຊາຍແດນ.

ກໍລະນີ ຜູ້ປະກອບການຕ້ອງການດຳເນີນຂັ້ນຕອນການແຈ້ງພາສີ ແລະ ກວດປ່ອຍສິນຄ້າ ນອກ ວັນ ແລະ ເວລາ ເຮັດວຽກປົກກະຕິ ເນື່ອງຈາກຄວາມຈຳເປັນ ເຊັ່ນ: ເປັນການນຳເຂົ້າ ຫຼື ສົ່ງອອກສັດມີຊີວິດ, ສິນຄ້າເນົ່າເປື່ອຍງ່າຍ, ເປັນສິນຄ້າບັນເທົາທຸກ, ສິນຄ້າອັນຕະລາຍທີ່ຕ້ອງໄດ້ເກັບຮັກສາດ້ວຍວິທີສະເພາະ ຫຼື ອະນຸຍາດນຳເຂົ້າ-ສົ່ງອອກ ໃກ້ໝົດກຳນົດ, ຜູ້ແຈ້ງພາສີ ສາມາດສະເໜີຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານ ເພື່ອພິຈາລະນາອະນຸຍາດຕາມຄວາມເໝາະສົມ ແລະ ສອດຄ່ອງຕາມລະບຽບການກຳນົດ.

ການປະກອບຂໍ້ມູນການແຈ້ງພາສີ ຜ່ານທາງ DTI ແລະ ອິນເຕີເນັດແມ່ນສາມາດດຳເນີນການໄດ້ຕະຫຼອດ 24 ຊົ່ວໂມງ ທຸກວັນ. ຍົກເວັ້ນກໍລະນີ ກົມພາສີອອກແຈ້ງການ ຢຸດຕິການບໍລິການຊົ່ວຄາວ ເພື່ອດຳເນີນການສ້ອມແປງ ແລະ ບຳລຸງຮັກສາ.

## 7. ຄວາມຮັບຜິດຊອບຂອງລັດຖະການພາສີ

ເພື່ອຮັບປະກັນໃຫ້ການດຳເນີນຂັ້ນຕອນການແຈ້ງພາສີ ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ ແລະ ເປັນທຳ, ລັດຖະການພາສີ ມີຄວາມຮັບຜິດຊອບຕົ້ນຕໍ ດັ່ງນີ້:

### 7.1 ຄວາມຮັບຜິດຊອບຂອງພະແນກການກົມພາສີ:

- ໃຫ້ຄຳແນະນຳທາງດ້ານວິຊາການແກ່ເຈົ້າໜ້າທີ່ພາສີ ແລະ ຜູ້ແຈ້ງພາສີ ກ່ຽວກັບການດຳເນີນຂັ້ນຕອນການແຈ້ງພາສີ, ການຈັດລະຫັດສິນຄ້າ, ການກຳນົດລະບອບການແຈ້ງ, ການກຳນົດມູນຄ່າແຈ້ງພາສີ, ການຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ອື່ນໆ;
- ໃຫ້ຄຳແນະນຳໃນການແກ້ໄຂບັນຫາດ້ານເຕັກນິກເວລາລະບົບເກີດບັນຫາຂັດຂ້ອງ;
- ປະສານງານກັບພາກສ່ວນກ່ຽວຂ້ອງເພື່ອຍົກສູງການອຳນວຍຄວາມສະດວກ, ແກ້ໄຂບັນຫາທີ່ຕິດພັນກັບການແຈ້ງພາສີເປັນລາຍລະອຽດ;
- ປະສານງານ ແລະ ໃຫ້ຄຳແນະນຳ ດ່ານພາສີຊາຍແດນ ໃນການຄຸ້ມຄອງແຜນນຳເຂົ້າສິນຄ້າ, ເຄື່ອງຂອງໃນລະບອບຍົກເວັ້ນ, ຫຼຸດຜ່ອນ ແລະ ງົດເກັບພາສີ;
- ເປັນເຈົ້າການເຜີຍແຜ່, ແນະນຳ ຂັ້ນຕອນ ແລະ ວິທີການແຈ້ງພາສີ ໃຫ້ຜູ້ປະກອບການ ຢ່າງທົ່ວເຖິງດ້ວຍການຈັດຝຶກອົບຮົມ, ສ້າງຄູ່ມືແນະນຳ, ສ້າງແຜ່ນພັບແນະນຳ ແລະ ອື່ນໆ.

### 7.2 ຄວາມຮັບຜິດຊອບຂອງດ່ານພາສີຊາຍແດນ:

- ດຳເນີນການຄວບຄຸມກວດກາ ຂໍ້ມູນ ແລະ ເອກະສານການແຈ້ງພາສີ ຢ່າງລະອຽດຖີ່ຖ້ວນ ຕາມກົນໄກບໍລິຫານຄວາມສ່ຽງ ເພື່ອຮັບປະກັນຄວາມຖືກຕ້ອງຕໍ່ກົດໝາຍ ແລະ ລະບຽບການ.
- ປະສານງານກັບຂະແໜງການລັດທີ່ປະຈຳຢູ່ດ່ານ ເພື່ອເພີ່ມທະວີການຮ່ວມມື ແລະ ຫຼຸດຜ່ອນຂັ້ນຕອນການຄວບຄຸມສິນຄ້າຢູ່ດ່ານພາສີຊາຍແດນ ໃຫ້ກະທັດຮັດ ແລະ ມີປະສິດທິຜົນ.
- ປຶກສາຫາລື ກັບ ລັດຖະການພາສີ ຂອງດ່ານປະເທດຄູ່ຮ່ວມຊາຍແດນ ເພື່ອກຳນົດເວລາ ແລະ ຂອບເຂດການເຄື່ອນໄຫວໃຫ້ສອດຄ່ອງກົມກຽວກັນ; ເພີ່ມທະວີການຮ່ວມມືແລກປ່ຽນຂໍ້ມູນຂ່າວສານ

ແລະ ການຫັນໄປດຳເນີນການກວດກາຮ່ວມກັນ ເພື່ອຍົກສູງປະສິດທິພາບໃນການຄວບຄຸມກວດກາສິນຄ້າ.

- ສາມາດເກັບຕົວຢ່າງສິນຄ້າ ໄປກວດກາຢູ່ຫ້ອງທົດລອງ ຫຼື ນຳໄປຂໍຄຳປຶກສາກັບຜູ້ຊ່ຽວຊານທີ່ກ່ຽວຂ້ອງ ເພື່ອຈຸດປະສົງການກວດກາການຈັດລະຫັດສິນຄ້າ, ການກຳນົດມູນຄ່າແຈ້ງພາສີ ແລະ ການກວດກາສິນຄ້າລະເມີດລິຂະສິດ. ການເກັບຕົວຢ່າງ ຕ້ອງເກັບໃນປະລິມານ ຫຼື ຈຳນວນໜ້ອຍທີ່ສຸດ.
- ຫ້າມເຈົ້າໜ້າທີ່ ກົດໜ່ວງຖ່ວງດຶງ, ນາບຂູ່ ຫຼື ສະແດງທ່າທີບໍ່ສຸພາບ ຕໍ່ຜູ້ປະກອບການ ເຊິ່ງຂັດກັບລະບຽບການ ແລະ ວິໄນຂອງລັດຖະກອນພາສີ.
- ໃຫ້ໂອກາດແກ່ຜູ້ແຈ້ງພາສີ ໃນການອະທິບາຍ, ຊີ້ແຈງ ແລະ ສະໜອງຂໍ້ມູນ ແລະ ເອກະສານເພີ່ມເຕີມ ໃນກໍລະນີມີຂໍ້ສົງໄສ ຫຼື ມີການກະທຳຜິດໃນການແຈ້ງພາສີ.
- ກຳນົດຂອບເຂດສະຖານທີ່ເຮັດວຽກຂອງເຈົ້າໜ້າທີ່ ແລະ ສະຖານທີ່ເຄື່ອນໄຫວຂອງຜູ້ປະກອບການຢ່າງຊັດເຈນ ໂດຍບໍ່ອະນຸຍາດໃຫ້ຜູ້ປະກອບການ ເຂົ້າມາເຄື່ອນໄຫວໃນບ່ອນເຮັດວຽກຂອງເຈົ້າໜ້າທີ່ພາສີ ເຊິ່ງເປັນການລົບກວນ ແລະ ເປີດໂອກາດໃຫ້ແກ່ການສົມຮູ້ຮ່ວມຄິດກະທຳຜິດ. ເຈົ້າໜ້າທີ່ພາສີ ແລະ ຜູ້ປະກອບການສາມາດປຶກສາຫາລືກັນ ຢູ່ສະຖານທີ່ທີ່ຈັດສັນໃຫ້ເທົ່ານັ້ນ.
- ເປັນເຈົ້າການເຜີຍແຜ່, ແນະນຳ ຂັ້ນຕອນ ແລະ ວິທີການແຈ້ງພາສີ ໃຫ້ຜູ້ປະກອບການ ຢ່າງທົ່ວເຖິງດ້ວຍການຈັດຝຶກອົບຮົມ, ການຕິດຕັ້ງປ້າຍແນະນຳ, ແຜນວາດຂັ້ນຕອນ, ແຜນພັບແນະນຳ ແລະ ອື່ນໆ.

**8. ຄວາມຮັບຜິດຊອບຂອງຜູ້ແຈ້ງພາສີ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນຂັ້ນຕອນການແຈ້ງພາສີ ຕໍ່ລັດຖະການພາສີ ມີຄວາມຮັບຜິດຊອບຕົ້ນຕໍດັ່ງນີ້:

- ປະກອບຂໍ້ມູນ, ເອກະສານ ແລະ ລົງລາຍເຊັນໃສ່ໃບແຈ້ງພາສີເປັນລາຍລະອຽດ ຢ່າງຖືກຕ້ອງ ແລະ ຄົບຖ້ວນ.
- ໃນກໍລະນີບໍ່ແນ່ໃຈກ່ຽວກັບສິນຄ້າ, ຜູ້ແຈ້ງພາສີ ສາມາດກວດກາສິນຄ້າຕົວຈິງໃນສາງ ແລະ ສາມາດເກັບຕົວຢ່າງໄປ ກວດກາຢູ່ຫ້ອງທົດລອງ ຫຼື ຫ້ອງການຂອງຕົນເອງ. ແຕ່ຕ້ອງດຳເນີນການແຈ້ງພາສີເປັນລາຍລະອຽດຕາມຂອບເຂດເວລາທີ່ກຳນົດໃນກົດໝາຍວ່າດ້ວຍພາສີ. ຈຳນວນ ຫຼື ຂະໜາດ ຂອງຕົວຢ່າງ ຕ້ອງນ້ອຍທີ່ສຸດ ແລະ ຕ້ອງໄດ້ຮັບການເຫັນດີຈາກເຈົ້າໜ້າທີ່ພາສີ. ການນຳຕົວຢ່າງໄປກວດກາບໍ່ຈຳເປັນຕ້ອງປະກອບເອກະສານແຈ້ງພາສີ ເປັນອັນສະເພາະ ແຕ່ຕ້ອງເຮັດບົດບັນທຶກການເກັບຕົວຢ່າງລະຫວ່າງ ເຈົ້າໜ້າທີ່ພາສີ (ເຈົ້າໜ້າທີ່ຈຸງານຄຸ້ມຄອງສາງສິນຄ້າ) ແລະ ຜູ້ແຈ້ງພາສີ.
- ພາຍຫຼັງປະກອບຂໍ້ມູນລົງໃສ່ໃບແຈ້ງພາສີເປັນລາຍລະອຽດ ແລະ ລົງທະບຽນໃບແຈ້ງໃນລະບົບອາຊີກູດາແລ້ວ, ຕ້ອງພິມໃບແຈ້ງພາສີອອກຈາກລະບົບ ເຊັນຢັ້ງຢືນຄວາມຖືກຕ້ອງ ແລະ ຍື່ນເອກະສານຕົ້ນສະບັບຕໍ່ລັດຖະການພາສີຢູ່ດ່ານພາສີຊາຍແດນ ເພື່ອດຳເນີນການກວດກາ.
- ຊຳລະຄ່າພາສີ ແລະ ພັນທະອື່ນ ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ.

- ຖ້າເປັນການແຈ້ງພາສີດ້ວຍຜູ້ບໍລິການແຈ້ງພາສີ (ບຸກຄົນທີ 3) ໃນນາມຜູ້ນໍາເຂົ້າ ຫຼື ຜູ້ສົ່ງອອກ ຫຼື ເຈົ້າຂອງສິນຄ້າ, ຕ້ອງມີການມອບສິດດໍາເນີນການແຈ້ງພາສີຢ່າງຖືກຕ້ອງ ແລະ ມີຜົນບັງຄັບໃຊ້ທາງດ້ານກົດໝາຍ.
- ເກັບສໍາເນົາຂໍ້ມູນ ແລະ ເອກະສານແຈ້ງພາສີ ທຸກສະບັບຢ່າງຄົບຖ້ວນ ເພື່ອການກວດສອບຄືນຫຼັງການແຈ້ງພາສີຕາມມາດຕາ 64 ຂອງກົດໝາຍວ່າດ້ວຍພາສີ.

**9. ເງື່ອນໄຂໃນການແຈ້ງພາສີດ້ວຍລະບົບອາຊີກູດາ**

ຜູ້ປະກອບການທີ່ຈະດໍາເນີນການແຈ້ງພາສີດ້ວຍລະບົບອາຊີກູດາ ຕ້ອງໄດ້ຮັບໃບຢັ້ງຢືນການຝຶກອົບຮົມລະບຽບການແຈ້ງພາສີ ແລະ ການນໍາໃຊ້ລະບົບອາຊີກູດາ. ພ້ອມທັງ ໄດ້ຮັບລະຫັດຜູ້ນໍາໃຊ້ລະບົບດັ່ງກ່າວ.

ຜູ້ປະກອບການທີ່ໄດ້ຮັບອະນຸຍາດເປັນຜູ້ນໍາໃຊ້ລະບົບອາຊີກູດາ ສາມາດນໍາໃຊ້ລະຫັດຜູ້ນໍາໃຊ້ຂອງຕົນ ເຂົ້າໃນການດໍາເນີນການແຈ້ງພາສີເປັນລາຍລະອຽດຢູ່ທຸກດ່ານພາສີຊາຍແດນທີ່ນໍາໃຊ້ລະບົບດັ່ງກ່າວ.

ກົມພາສີ ຈະອອກລະບຽບການກ່ຽວກັບການຄຸ້ມຄອງຜູ້ນໍາໃຊ້ລະບົບອາຊີກູດາ ເປັນອັນສະເພາະ.

**10. ການແຈ້ງພາສີຂາເຂົ້າ**

ການແຈ້ງພາສີຂາເຂົ້າ ຕ້ອງດໍາເນີນຕາມຂັ້ນຕອນ ດັ່ງລຸ່ມນີ້:

10.1 **ຂັ້ນຕອນທີ 1:** ການແຈ້ງໃບຂົນສົ່ງສິນຄ້າ

10.1.1 ພາຍຫຼັງສິນຄ້າມາຮອດດ່ານ ຜູ້ແຈ້ງພາສີ, ຜູ້ຂົບລົດບັນທຸກສິນຄ້າ ຫຼື ພະນັກງານຄຸ້ມຄອງສາງສິນຄ້າປະຈໍາສະໜາມບິນ ຕ້ອງນໍາເອົາໃບຂົນສົ່ງສິນຄ້າ ຍື່ນຕໍ່ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບຄຸ້ມຄອງໃບຂົນສົ່ງສິນຄ້າ ພາຍໃນ 24 ຊົ່ວໂມງ ຕາມມາດຕາ 19 ຂອງກົດໝາຍວ່າດ້ວຍພາສີ.

10.1.2 ເຈົ້າໜ້າທີ່ຄຸ້ມຄອງສາງສິນຄ້າ ຮັບໃບຂົນສົ່ງ ແລະ ພິມຂໍ້ມູນການຂົນສົ່ງສິນຄ້າ ລົງໃນລະບົບຄຸ້ມຄອງຂໍ້ມູນການຂົນສົ່ງ. ສໍາລັບດ່ານພາສີຊາຍແດນທີ່ບໍ່ໄດ້ນໍາໃຊ້ລະບົບຄຸ້ມຄອງຂໍ້ມູນການຂົນສົ່ງ ແມ່ນໃຫ້ບັນທຶກຂໍ້ມູນດັ່ງກ່າວດ້ວຍປຶ້ມຕິດຕາມສິນຄ້າເຂົ້າ-ອອກສາງ. ຈາກນັ້ນ, ຈຶ່ງອະນຸຍາດໃຫ້ຜູ້ແຈ້ງພາສີ ນໍາເອົາສິນຄ້າເຂົ້າສາງ ຫຼື ສະຖານທີ່ຈອດລົດບັນທຸກ ເພື່ອດໍາເນີນຂັ້ນຕອນແຈ້ງສິນຄ້າຊົ່ວຄາວ ແລະ ການປະກອບໃບແຈ້ງພາສີເປັນລາຍລະອຽດ.

**10.2 ຂັ້ນຕອນທີ 2: ການປະກອບຂໍ້ມູນ ແລະ ເອກະສານແຈ້ງພາສີເປັນລາຍລະອຽດ**

**10.2.1 ການປະກອບຂໍ້ມູນໃສ່ໃບແຈ້ງພາສີ:**

- ຜູ້ແຈ້ງພາສີ ຕ້ອງປະກອບຂໍ້ມູນໃສ່ໃບແຈ້ງພາສີເປັນລາຍລະອຽດ ໃນລະບົບອາຊີກູດາ ຜ່ານໂມດູນການແຈ້ງພາສີເປັນລາຍລະອຽດ. ຜູ້ແຈ້ງພາສີ ສາມາດນໍາໃຊ້ເຄື່ອງຄອມພິວເຕີ ຢູ່ຫ້ອງຂໍ້ມູນຂ່າວສານຂອງດ່ານພາສີຊາຍແດນ ເພື່ອປະກອບຂໍ້ມູນ ແລະ ເອກະສານແຈ້ງພາສີ. ສໍາລັບຜູ້ປະກອບການທີ່ໄດ້ຕິດຕັ້ງ DTI ແລະ/ຫຼື ລົງທະບຽນແຈ້ງພາສີຜ່ານລະບົບອິນເຕີເນັດ ແມ່ນສາມາດປະກອບຂໍ້ມູນ ແລະ ເອກະສານແຈ້ງພາສີ ໂດຍນໍາໃຊ້ເຄື່ອງຄອມພິວເຕີຢູ່ຫ້ອງການຂອງຕົນເອງໄດ້.

- ພາຍຫຼັງສິນຄ້າມາຮອດດ່ານພາສີຊາຍແດນ, ຜູ້ແຈ້ງພາສີຕ້ອງດຳເນີນຂັ້ນຕອນການແຈ້ງພາສີເປັນລາຍລະອຽດພາຍໃນເວລາທີ່ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍວ່າດ້ວຍພາສີ. ຜູ້ແຈ້ງພາສີສາມາດປະກອບຂໍ້ມູນ ແລະ ເອກະສານແຈ້ງພາສີເປັນລາຍລະອຽດລ່ວງໜ້າ ກ່ອນສິນຄ້າມາຮອດດ່ານ ໂດຍປະຕິບັດຕາມ ຂໍ້ 13 ຂອງບົດແນະນຳສະບັບນີ້.
- ໃບແຈ້ງລາຄາ (ໃບອິນວອຍ) 1 ຊຸດ ຕ້ອງປະກອບເອກະສານແຈ້ງພາສີ 1 ຊຸດ. ຍົກເວັ້ນການແຈ້ງນຳເຂົ້າພາຫະນະ ເຊິ່ງຕ້ອງແຈ້ງພະຫະນະ 1 ຄັນ ຕໍ່ໃບແຈ້ງພາສີ 1 ຊຸດ. ສຳລັບການແຈ້ງພາສີນຳເຂົ້າສິນຄ້າປະເພດລົດຈັກ ແມ່ນໃຫ້ປະຕິບັດຕາມແຈ້ງການກົມພາສີ ສະບັບເລກທີ 02320/ກພສ, ລົງວັນທີ 18 ມີນາ 2014.
- ພາຍຫຼັງສຳເລັດການປະກອບຂໍ້ມູນການແຈ້ງພາສີ, ຜູ້ແຈ້ງພາສີ ຕ້ອງກວດກາຄວາມຖືກຕ້ອງ ແລະຄົບຖ້ວນຂອງຂໍ້ມູນຢ່າງລະອຽດ ໂດຍສະເພາະແມ່ນລະຫັດສິນຄ້າ (HS Code), ມູນຄ່າແຈ້ງພາສີ, ການຫຼຸດຜ່ອນ ຫຼື ຍົກເວັ້ນພາສີ-ອາກອນ ແລະ ສິດທິພິເສດດ້ານອັດຕາພາສີຕາມສັນຍາການຄ້າເສລີຕ່າງໆ.
- ລະບົບອາຊິກຸດາ ດຳເນີນການຄິດໄລ່ຄ່າພາສີ ແລະ ພັນທະອື່ນ ທີ່ຕ້ອງຊຳລະແບບອັດຕະໂນມັດໂດຍອີງໃສ່ຂໍ້ມູນທີ່ຜູ້ແຈ້ງໄດ້ປະກອບເຂົ້າໃສ່ໃບແຈ້ງພາສີ.

**10.2.2 ການຄັດຕິດເອກະສານປະກອບການແຈ້ງພາສີ:**

- ພາຍຫຼັງ ສຳເລັດການປະກອບຂໍ້ມູນແລ້ວ, ຜູ້ແຈ້ງພາສີຕ້ອງໄດ້ສະແກນ(scan) ເອກະສານປະກອບ ເພື່ອຄັດຕິດເປັນເອກະສານເອເລັກໂຕຣນິກໃນຮູບແບບ pdf, png ຫຼື jpeg. ເອກະສານປະກອບການແຈ້ງພາສີເປັນລາຍລະອຽດ ມີດັ່ງນີ້:
  - ໃບແຈ້ງລາຄາ
  - ໃບລາຍການຫຸ້ມຫໍ່ສິນຄ້າ
  - ໃບຂົນສົ່ງສິນຄ້າ (ຖ້າມີ)
  - ໃບແຈ້ງສິນຄ້າຊົ່ວຄາວ (ຖ້າມີ)
  - ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ກໍລະນີຕ້ອງການສິດທິພິເສດດ້ານອັດຕາພາສີ)
  - ໃບຢັ້ງຢືນສິດທິພິເສດດ້ານອັດຕາພາສີຂອງກົມພາສີ (ກໍລະນີຕ້ອງການສິດທິພິເສດດ້ານອັດຕາພາສີ)
  - ໃບອະນຸຍາດຈາກຂະແໜງການລັດທີ່ກ່ຽວຂ້ອງ (ກໍລະນີເປັນສິນຄ້າລັດຄວບຄຸມ)
  - ໃບມອບສິດການແຈ້ງພາສີ (ຖ້າເປັນການແຈ້ງພາສີດ້ວຍຜູ້ບໍລິການແຈ້ງພາສີ)
- ເອກະສານປະກອບການແຈ້ງພາສີ ຕ້ອງແຈ້ງຊັດເຈນ, ບໍ່ມີຮອຍຂີດຂ້າ, ສາມາດອ່ານໄດ້ງ່າຍ ແລະມີເນື້ອໃນຄົບຖ້ວນຕາມເອກະສານຕົ້ນສະບັບ. ຂະໜາດຂອງໄຟລ໌ ແມ່ນບໍ່ໃຫ້ໃຫຍ່ກວ່າ 500 Kb ຕໍ່ 1 ເອກະສານ.

**10.2.3 ການຢັ້ງຢືນຄວາມຖືກຕ້ອງໃບແຈ້ງພາສີ**

ຫຼັງຈາກສຳເລັດການປະກອບຂໍ້ມູນຢ່າງຄົບຖ້ວນແລ້ວ ຜູ້ແຈ້ງພາສີ ຕ້ອງພິມໃບແຈ້ງພາສີທີ່ໄດ້ລົງທະບຽນແລ້ວ ອອກຈາກລະບົບອາຊິກຸດາ ໂດຍນຳໃຊ້ແບບພິມທີ່ລັດຖະການພາສີພິມຈຳໜ່າຍ

ພ້ອມທັງລົງລາຍເຊັນ ແລະ ຈ້ຳກາ ໃສ່ຫ້ອງ 54 ຢ່າງຖືກຕ້ອງ. ຊື່ຜູ້ແຈ້ງພາສີໃນຫ້ອງ 14 ແລະ ຫ້ອງ 54 ຕ້ອງແມ່ນຜູ້ດຽວກັນ. ກໍລະນີຜູ້ນຳເຂົ້າສິນຄ້າເປັນຜູ້ແຈ້ງພາສີເອງ ຊື່ຜູ້ນຳເຂົ້າໃນຫ້ອງ 8 ຕ້ອງກົງກັບຊື່ຜູ້ແຈ້ງພາສີໃນຫ້ອງ 14 ແລະ ຜູ້ລົງລາຍເຊັນໃນຫ້ອງ 54. ກໍລະນີ ເປັນການແຈ້ງພາສີດ້ວຍຜູ້ບໍລິການແຈ້ງພາສີ ຫ້ອງ 8 ໃຫ້ລະບຸຊື່ຜູ້ນຳເຂົ້າ (ເຈົ້າຂອງສິນຄ້າ ຫຼື ຜູ້ຮັບສິນຄ້າ), ສ່ວນຫ້ອງ 14 ແລະ 54 ແມ່ນໃສ່ຊື່ຜູ້ບໍລິການແຈ້ງພາສີ.

**10.2.4 ການລົງທະບຽນ ແລະ ການຍື່ນເອກະສານແຈ້ງພາສີ**

- ຫຼັງຈາກກວດກາຄວາມຖືກຕ້ອງແລ້ວ, ໃຫ້ຜູ້ແຈ້ງພາສີຕ້ອງລົງທະບຽນໃບແຈ້ງໃນລະບົບອາຊີກຸດາ. ລະບົບຈະບັນທຶກຂໍ້ມູນການແຈ້ງ, ດຳເນີນຂະບວນການວິໄຈຂໍ້ມູນແບບອັດຕະໂນມັດ ແລະ ສົ່ງໃຫ້ເຈົ້າໜ້າທີ່ພາສີດຳເນີນການກວດກາຂໍ້ມູນ ແລະ ເອກະສານແຈ້ງພາສີທັງໝົດ.
- ລະບົບອາຊີກຸດາ ເປັນຜູ້ກຳນົດເລກທີ່ໃບແຈ້ງໂດຍອັດຕະໂນມັດ. ໃບແຈ້ງພາສີທີ່ລົງທະບຽນໃນລະບົບອາຊີກຸດາແລ້ວ, ຜູ້ແຈ້ງພາສີ ບໍ່ສາມາດດັດແກ້, ປັບປຸງ ຫຼື ເພີ່ມເຕີມ ຂໍ້ມູນໃດໆໄດ້. ກໍລະນີ ຜູ້ແຈ້ງພາສີກວດພົບເຫັນຂໍ້ມູນ ຫຼື ເອກະສານບໍ່ຖືກຕ້ອງ ພາຍຫຼັງການລົງທະບຽນໃບແຈ້ງພາສີແລ້ວ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ສອບຖາມ ແລະ ສະສາງ ປະຈຳດ່ານພາສີ ຮັບຊາບທັນທີ ໂດຍປະຕິບັດຕາມຂໍ້ທີ 12 ຂອງບົດແນະນຳສະບັບນີ້.
- ຜູ້ແຈ້ງພາສີ ຕ້ອງນຳເອົາໃບແຈ້ງພາສີຕົ້ນສະບັບ ພ້ອມດ້ວຍເອກະສານປະກອບທັງໝົດ ໄປຍື່ນຕໍ່ເຈົ້າໜ້າທີ່ຢູ່ດ່ານພາສີ ເພື່ອດຳເນີນກວດກາຕາມລະບຽບການ.
- ຖ້າເຈົ້າໜ້າທີ່ພາສີກວດພົບເຫັນວ່າ ມີການລົງທະບຽນໃບແຈ້ງພາສີໃນລະບົບ ແຕ່ບໍ່ມີການຍື່ນເອກະສານແຈ້ງພາສີຢ່າງເປັນທາງການ ພາຍໃນ ເຈັດ ວັນ, ເຈົ້າໜ້າທີ່ຮັບຜິດຊອບວຽກງານສອບຖາມ ແລະ ສະສາງ ຕ້ອງເອີ້ນຜູ້ແຈ້ງພາສີເຂົ້າມາສອບຖາມ ຖ້າເຫັນວ່າເປັນການກະທຳຜິດໂດຍເຈດຕະນາ ຈະຖືກປະຕິບັດມາດຕະການຢ່າງເຂັ້ມງວດ.
- ພາຍຫຼັງລົງທະບຽນໃບແຈ້ງພາສີ ແລະ ຍື່ນເອກະສານແຈ້ງພາສີເປັນລາຍລະອຽດແລ້ວ. ຜູ້ແຈ້ງພາສີ ສາມາດຕິດຕາມຄວາມຄືບໜ້າຂອງການດຳເນີນຂັ້ນຕອນໃນລະບົບອາຊີກຸດາ.

## 10.3 ຂັ້ນຕອນທີ 3: ການກວດກາ ແລະ ຄວບຄຸມຂອງເຈົ້າໜ້າທີ່ພາສີ

### 10.3.1 ການຢືນຢັນການລົງທະບຽນໃບແຈ້ງພາສີ

ພາຍຫຼັງຜູ້ແຈ້ງພາສີ ປະກອບຂໍ້ມູນການແຈ້ງ ແລະ ລົງທະບຽນໃບແຈ້ງພາສີໃນລະບົບອາຊີກຸດາແລ້ວ, ເຈົ້າໜ້າທີ່ກວດກາຂໍ້ມູນເບື້ອງຕົ້ນ ຕ້ອງຢືນຢັນການລົງທະບຽນໃບແຈ້ງພາສີ ໂດຍບໍ່ຕ້ອງລໍຖ້າເອກະສານຕົ້ນສະບັບ ເພື່ອໃຫ້ລະບົບອາຊີກຸດາ ດຳເນີນຂັ້ນຕອນການວິເຄາະຄວາມສ່ຽງແບບອັດຕະໂນມັດ ເພື່ອສະແດງຜົນການກວດກາຄວາມສ່ຽງເປັນຊ່ອງຄວາມສ່ຽງຕ່ຳ(ຊ່ອງສີຂຽວ), ຊ່ອງຄວາມສ່ຽງປານກາງ (ຊ່ອງສີເຫຼືອງ) ຫຼື ຊ່ອງຄວາມສ່ຽງສູງ(ຊ່ອງສີແດງ). ຈາກນັ້ນ, ໃຫ້ສົ່ງເອກະສານໄປໃຫ້ເຈົ້າໜ້າທີ່ທີ່ຮັບຜິດຊອບກວດກາຢູ່ແຕ່ລະຊ່ອງຄວາມສ່ຽງ.

### 10.3.2 ການກວດກາຂໍ້ມູນ, ເອກະສານ ແລະ ການກວດກາສິນຄ້າຕົວຈິງ

ການຄວບຄຸມກວດກາຕ້ອງປະຕິບັດຕາມລະດັບຄວາມສ່ຽງ ດັ່ງນີ້:

**ກ.ກໍລະນີເປັນການແຈ້ງທີ່ມີຄວາມສ່ຽງຕ່ຳ**

- ເຈົ້າໜ້າທີ່ພາສີ ຕ້ອງດຳເນີນການກວດກາຂໍ້ມູນການແຈ້ງເບື້ອງຕົ້ນ ໂດຍສຸມໃສ່ກວດກາເອກະສານປະກອບການແຈ້ງພາສີ (ໃບແຈ້ງລາຄາ, ໃບລາຍການຫຸ້ມຫໍ່, ໃບຂົນສົ່ງ, ໃບອະນຸຍາດ, ໃບຢັ້ງຢືນແຫຼ່ງກຳເນີດ ແລະ ອື່ນໆ), ຊື່ ຜູ້ແຈ້ງພາສີ ຫຼື ຜູ້ບໍລິການແຈ້ງພາສີ ການເລືອກໃຊ້ສິດທິພິເສດດ້ານອັດຕາພາສີ ແລະ ອື່ນໆ.
- ກໍລະນີໄດ້ຮັບເອກະສານແຈ້ງພາສີຕົ້ນສະບັບແລ້ວ ໃຫ້ກວດກາຄວາມຖືກຕ້ອງຂອງການເຊັນຢັ້ງຢືນ ແລະ ປະທັບກາ.
- ກໍລະນີ ເປັນການແຈ້ງພາສີນຳເຂົ້າສິນຄ້າທີ່ໄດ້ຮັບນະໂຍບາຍຍົກເວັ້ນ, ຫຼຸດຜ່ອນ ແລະ ງົດເກັບພາສີ-ພັນທະອື່ນ, ເຈົ້າໜ້າທີ່ຕ້ອງກວດກາສົມທຽບໃສ່ແຜນນຳເຂົ້າ ທີ່ໄດ້ຮັບອະນຸມັດຈາກກົມພາສີ, ກະຊວງການເງິນ, ສະພາບໍລິຫານເຂດເສດຖະກິດພິເສດ-ເຂດເສດຖະກິດສະເພາະ ແລະ ຄະນະຄຸ້ມຄອງການລົງທຶນຂັ້ນທ້ອງຖິ່ນ.
- ພາຍຫຼັງສຳເລັດການກວດກາຂໍ້ມູນເບື້ອຕົ້ນ ຕ້ອງປະຕິບັດ ດັ່ງນີ້:
  - **ຖ້າບໍ່ພົບຄວາມຜິດ:** ເຈົ້າໜ້າທີ່ກວດກາຂໍ້ມູນການແຈ້ງເບື້ອງຕົ້ນ ຕ້ອງຕື່ມຂໍ້ມູນໃສ່ໃບຕິດຕາມເອກະສານ ແລ້ວສົ່ງເອກະສານໃຫ້ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງພິຈາລະນາ. ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງ ສາມາດເຂົ້າໄປກວດກາຂໍ້ມູນໃນລະບົບ ຖ້າບໍ່ພົບຄວາມຜິດ ໃຫ້ດຳເນີນການຮັບຮອງການແຈ້ງໃນລະບົບ, ພ້ອມທັງລົງລາຍເຊັນ ແລະ ຈ້ຳກາຊື່ ໃນຫ້ອງ 54 ໃນໃບແຈ້ງພາສີເປັນລາຍລະອຽດ . ການຮັບຮອງການແຈ້ງສາມາດດຳເນີນການໄດ້ພາຍຫຼັງໄດ້ຮັບເອກະສານແຈ້ງພາສີຕົ້ນສະບັບເທົ່ານັ້ນ.
  - **ຖ້າພົບເຫັນຄວາມຜິດ:** ໃຫ້ປ່ຽນສະຖານະພາບການແຈ້ງໄປເປັນການສອບຖາມ ແລະ ສະສາງ, ບັນທຶກຜົນການກວດພົບເຫັນຄວາມຜິດລົງໃນໃບບັນທຶກຜົນການກວດກາ (Inspection Act), ຕື່ມຂໍ້ມູນໃສ່ໃບຕິດຕາມເອກະສານ ແລ້ວສົ່ງໃຫ້ເຈົ້າໜ້າທີ່ ສອບຖາມ ແລະ ສະສາງດຳເນີນການ.

**ຂ. ກໍລະນີເປັນການແຈ້ງທີ່ມີຄວາມສ່ຽງປານກາງ**

ເຈົ້າໜ້າທີ່ພາສີ ຕ້ອງດຳເນີນການກວດກາຂໍ້ມູນ ແລະ ເອກະສານແຈ້ງພາສີຢ່າງລະອຽດ ໂດຍສຸມໃສ່ກວດກາການຈັດລະຫັດສິນຄ້າ, ການກຳນົດມູນຄ່າແຈ້ງພາສີ, ການຢັ້ງຢືນແຫຼ່ງກຳເນີດ, ການອະນຸຍາດຂອງຂະແໜງການກ່ຽວຂ້ອງ ແລະ ອື່ນໆ.

ພາຍຫຼັງສຳເລັດການກວດກາແລ້ວ ໃຫ້ດຳເນີນການ ດັ່ງນີ້:

- **ຖ້າບໍ່ພົບເຫັນຄວາມຜິດ:** ເຈົ້າໜ້າທີ່ກວດກາເອກະສານຕ້ອງຢັ້ງຢືນຄວາມຖືກຕ້ອງໃນລະບົບອາຊີກຸດາ ແລ້ວສົ່ງໃຫ້ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງພິຈາລະນາ. ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງ ສາມາດຈະເຂົ້າໄປກວດກາຂໍ້ມູນໃນລະບົບ ຖ້າບໍ່ພົບຄວາມຜິດແມ່ນໃຫ້ຊີ້ນຳເຈົ້າໜ້າທີ່ກວດກາເອກະສານປ່ຽນເປັນສະຖານະພາບການແຈ້ງເປັນຄວາມສ່ຽງຕ່ຳ. ຈາກນັ້ນຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງດຳເນີນການຮັບຮອງການແຈ້ງໃນລະບົບ, ພ້ອມທັງລົງລາຍເຊັນ ແລະ ຈ້ຳກາຊື່ ໃນຫ້ອງ 54 ໃນໃບແຈ້ງພາສີເປັນລາຍລະອຽດ (ຫ້ອງ 54).

ການຮັບຮອງການແຈ້ງສາມາດດຳເນີນການໄດ້ພາຍຫຼັງໄດ້ຮັບເອກະສານແຈ້ງພາສີຕົ້ນສະບັບເທົ່ານັ້ນ.

– **ຖ້າພົບເຫັນຄວາມຜິດ** ເຊັ່ນ: ການຈັດລະຫັດສິນຄ້າ, ການກຳນົດມູນຄ່າແຈ້ງພາສີ, ການຢັ້ງຢືນແຫຼ່ງກຳເນີດ, ໃບອະນຸຍາດ, ໃບທະບຽນວິສາຫະກິດ ຫຼື ອື່ນໆ ບໍ່ຖືກຕ້ອງ, ເຈົ້າໜ້າທີ່ພາສີ ຕ້ອງປ່ຽນເປັນສະຖານະພາບການແຈ້ງໄປເປັນການສອບຖາມ ແລະ ສະສາງ ພ້ອມທັງບັນທຶກຜົນການກວດກາລົງໃນແບບຟອມບັນທຶກການກວດກາ (Inspection Act) ໃນລະບົບອາຊີກູດາ ແລະໃຫ້ສົ່ງເອກະສານທັງໝົດ ໃຫ້ຈຸງານສອບຖາມ ແລະ ສະສາງ ເປັນຜູ້ດຳເນີນການ.

– **ກໍລະນີມີຂໍ້ສົງໄສ** ເຊັ່ນ: ຜູ້ນຳເຂົ້າ ບໍ່ເຄີຍນຳເຂົ້າສິນຄ້າປະເພດນີ້ມາກ່ອນ, ລະບົບອາຊີກູດາແຈ້ງໃຫ້ເອົາໃຈໃສ່ກວດກາດ້ານມູນຄ່າແຈ້ງ, ເອກະສານມີຮ່ອງຮອຍການດັດແປງ ຫຼື ອື່ນໆ ຕ້ອງແຈ້ງໃຫ້ຜູ້ແຈ້ງພາສີສະໜອງຂໍ້ມູນ ແລະ ເອກະສານເພີ່ມເຕີມ ເຊັ່ນ: ສັນຍາຊື້-ຂາຍສິນຄ້າ, ໃບຢັ້ງຢືນການຊຳລະສະສາງຜ່ານທະນາຄານ, ໃບທະບຽນວິສາຫະກິດ ແລະ ອື່ນໆ.

ຜ່ານການກວດກາຂໍ້ມູນ ແລະ ເອກະສານເພີ່ມເຕີມ ຫາກເຫັນວ່າໜ້າເຊື່ອຖື ແລະ ສາມາດຮັບເອົາໄດ້ ແມ່ນໃຫ້ດຳເນີນການຢືນຢັນຄວາມຖືກຕ້ອງໃນລະບົບອາຊີກູດາ ແລ້ວສົ່ງໃຫ້ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງພິຈາລະນາຮັບຮອງ.

ຖ້າກວດກາແລ້ວຍັງບໍ່ມີຄວາມຊັດເຈນ ແລະ ພິຈາລະນາເຫັນວ່າ ຄວນມີການກວດກາສິນຕົວຈິງເພື່ອໃຫ້ແນ່ໃຈວ່າສິນຄ້າທີ່ນຳເຂົ້ານັ້ນຖືກຕ້ອງຕາມການແຈ້ງຕົວຈິງ ຫຼື ບໍ່, ເຈົ້າໜ້າທີ່ກວດກາເອກະສານ ນຳສະເໜີຕໍ່ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງພິຈາລະນາ. ພາຍຫຼັງພິຈາລະນາແລ້ວ ຖ້າຫົວໜ້າ ຫຼື ຮອງຫົວໜ້າຈຸງານດັ່ງກ່າວ ເຫັນວ່າຄວນດຳເນີນການກວດກາສິນຄ້າຕົວຈິງ ແມ່ນໃຫ້ຊີ້ນຳເຈົ້າໜ້າທີ່ກວດກາເອກະສານ ດຳເນີນການປ່ຽນສະຖານະພາບເປັນຄວາມສ່ຽງສູງ ແລະ ບັນທຶກຂໍ້ສົງໃສລົງໃນແບບຟອມບັນທຶກການກວດກາ (Inspection Act) ໃນລະບົບອາຊີກູດາ ແລະ ສົ່ງເອກະສານທັງໝົດໃຫ້ເຈົ້າໜ້າທີ່ກວດກາສິນຄ້າ ເພື່ອດຳເນີນການກວດກາສິນຄ້າຕົວຈິງ.

**ຄ.ກໍລະນີເປັນການແຈ້ງທີ່ມີຄວາມສ່ຽງສູງ**

ການແຈ້ງພາສີທີ່ມີຄວາມສ່ຽງສູງ ຕ້ອງຜ່ານການກວດກາທັງ 2 ລະດັບຄື ກວດກາເອກະສານແຈ້ງພາສີຢ່າງລະອຽດ ແລະ ກວດກາສິນຄ້າຕົວຈິງ.

– **ການກວດກາເອກະສານ:** ເຈົ້າໜ້າທີ່ພາສີ ຕ້ອງດຳເນີນການກວດກາຂໍ້ມູນ ແລະ ເອກະສານແຈ້ງພາສີຢ່າງລະອຽດ. ພາຍຫຼັງສຳເລັດການກວດກາແລ້ວ ໃຫ້ດຳເນີນການ ດັ່ງນີ້:
  - **ຖ້າບໍ່ພົບເຫັນຄວາມຜິດ:** ເຈົ້າໜ້າທີ່ກວດກາເອກະສານ ຕ້ອງຢັ້ງຢືນຄວາມຖືກຕ້ອງໃນລະບົບອາຊີກູດາ ແລ້ວສົ່ງໃຫ້ເຈົ້າໜ້າທີ່ກວດກາສິນຄ້າເພື່ອດຳເນີນການກວດກາສິນຄ້າຕົວຈິງ.
  - **ຖ້າພົບເຫັນຄວາມຜິດ** ເຊັ່ນ: ການຈັດລະຫັດສິນຄ້າ, ການກຳນົດມູນຄ່າແຈ້ງພາສີ, ການຢັ້ງຢືນແຫຼ່ງກຳເນີດ, ໃບອະນຸຍາດ, ໃບທະບຽນວິສາຫະກິດ ຫຼື ອື່ນໆ ບໍ່ຖືກຕ້ອງ, ເຈົ້າໜ້າທີ່ກວດກາເອກະສານຕ້ອງບັນທຶກຜົນການກວດກາລົງໃນແບບຟອມບັນທຶກການກວດກາ (Inspection Act) ໃນລະບົບອາຊີກູດາ ແລ້ວສົ່ງໃຫ້ເຈົ້າໜ້າທີ່ກວດກາສິນຄ້າ ດຳເນີນການ

ກວດກາສິນຄ້າຕົວຈິງ. ຫຼັງຈາກສໍາເລັດການກວດກາສິນຄ້າຕົວຈິງ ແລະ ບັນທຶກຜົນການກວດກາສິນຄ້າຕົວຈິງແລ້ວ ໃຫ້ສົ່ງເອກະສານທັງໝົດ ໃຫ້ຈຸງານສອບຖາມ ແລະ ສະສາງ ເປັນຜູ້ດໍາເນີນການ.

– **ການກວດກາສິນຄ້າຕົວຈິງ:** ພາຍຫຼັງລະບົບອາຊີກຸດາໄດ້ສະແດງຜົນເປັນຄວາມສ່ຽງເປັນຄວາມສ່ຽງສູງແຕ່ເບື້ອງຕົ້ນ ຫຼື ມີການປ່ຽນສະຖານະພາບມາເປັນຄວາມສ່ຽງສູງ, ລະບົບອາຊີກຸດາ ຈະດໍາເນີນການຄັດເລືອກເຈົ້າໜ້າທີ່ກວດກາສິນຄ້າ ແບບອັດຕະໂນມັດ ໂດຍນໍາໃຊ້ຫຼັກການສຸ່ມຄັດເລືອກ. ເຈົ້າໜ້າທີ່ ທີ່ໄດ້ຮັບການຄັດເລືອກໂດຍລະບົບອາຊີກຸດາ ຕ້ອງດໍາເນີນການກວດກາສິນຄ້າຕົວຈິງທັນທີ ໂດຍສຸມໃສ່ກວດກາ ປະເພດ, ຊະນິດ, ລຸ້ນ, ຍີ່ຫໍ້, ນໍ້າໜັກ, ຂະໜາດ, ຈໍານວນ, ປະເທດຜະລິດ, ລັກສະນະການຫຸ້ມຫໍ່ ແລະ ລັກສະນະທາງກາຍະພາບອື່ນໆ. ການກວດກາສິນຄ້າຕົວຈິງ ຕ້ອງດໍາເນີນໂດຍຊ້ອງໜ້າຜູ້ແຈ້ງພາສີ.

ເຈົ້າໜ້າທີ່ກວດກາສິນຄ້າ ສາມາດນໍາໃຊ້ເຄື່ອງຄອມພິວເຕີທີ່ຕິດຕັ້ງໃຫ້ຈຸງານຄຸ້ມຄອງສາງສິນຄ້າ, ຄອມພິວເຕີແບບພົກພາ (Laptop) ຫຼື ແທບເບລດ ທີ່ກົມພາສີປະກອບໃຫ້ ເພື່ອບັນທຶກຜົນການກວດກາ. ພາຍຫຼັງ ກວດກາແລ້ວຕ້ອງປະຕິບັດດັ່ງນີ້:

- **ຖ້າບໍ່ພົບເຫັນຄວາມຜິດ:** ເຈົ້າໜ້າທີ່ກວດກາສິນຄ້າຕົວຈິງຕ້ອງຢັ້ງຢືນຄວາມຖືກຕ້ອງໃນລະບົບອາຊີກຸດາ. ຈາກນັ້ນ, ສົ່ງເອກະສານໃຫ້ຫົວໜ້າ ຫຼື ຮອງຫົວໜ້າຈຸງານກວດກາສິນຄ້າພິຈາລະນາ. ຫົວໜ້າ ຫຼື ຮອງຫົວໜ້າຈຸງານກວດກາສິນຄ້າ ເຂົ້າໄປກວດກາຂໍ້ມູນໃນລະບົບ ຖ້າເຫັນດີຕາມການກວດກາຂອງເຈົ້າໜ້າທີ່ກວດກາ ແມ່ນໃຫ້ຊີ້ນໍາເຈົ້າໜ້າທີ່ກວດກາສິນຄ້າ ປ່ຽນສະຖານະພາບເປັນການແຈ້ງຄວາມສ່ຽງຕໍ່າ ແລະ ຫົວໜ້າ ຫຼື ຮອງຫົວໜ້າຈຸງານກວດກາສິນຄ້າ ດໍາເນີນການຮັບຮອງການແຈ້ງໃນລະບົບ, ພ້ອມທັງລົງລາຍເຊັນ ແລະ ຈໍ້າກາຊື່ ໃນຫ້ອງ 54 ໃນໃບແຈ້ງພາສີເປັນລາຍລະອຽດ.
- **ຖ້າພົບເຫັນຄວາມຜິດ** ເຊັ່ນ: ຂໍ້ມູນການແຈ້ງດ້ານຈໍານວນ, ຂະໜາດ, ນໍ້າໜັກ, ປະເທດຜະລິດ, ລຸ້ນ, ຍີ່ຫໍ້ ບໍ່ກົງກັບສິນຄ້າຕົວຈິງ, ເຈົ້າໜ້າທີ່ກວດກາສິນຄ້າຕົວຈິງຕ້ອງປ່ຽນສະຖານະພາບການແຈ້ງໄປເປັນການສອບຖາມ ແລະ ສະສາງ, ພ້ອມທັງບັນທຶກຜົນການກວດກາລົງໃນແບບຟອມບັນທຶກການກວດກາ (Inspection Act) ໃນລະບົບອາຊີກຸດາ. ຈາກນັ້ນ ຕ້ອງສົ່ງເອກະສານທັງໝົດ ໃຫ້ເຈົ້າໜ້າທີ່ສອບຖາມ ແລະ ສະສາງ ເປັນຜູ້ດໍາເນີນການ.

**10.3.3 ການຄຸ້ມຄອງຫັກລົບແຜນຍົກເວັ້ນ, ຫຼຸດຜ່ອນ ຫຼື ງົດເກັບພາສີ**

ກໍລະນີເປັນການນໍາເຂົ້າ ທີ່ໄດ້ຮັບນະໂຍບາຍຍົກເວັ້ນ, ຫຼຸດຜ່ອນ ຫຼື ງົດເກັບພາສີ-ພັນທະອື່ນ, ຕ້ອງດໍາເນີນການກວດກາ ແລະ ຫັກລົບແຜນນໍາເຂົ້າ-ສົ່ງອອກ ໃນເວລາກວດກາຂໍ້ມູນເບື້ອງຕົ້ນ. ໂດຍນໍາໃຊ້ລະບົບຄຸ້ມຄອງການຫັກລົບແຜນທີ່ຕິດຕັ້ງຢູ່ດ່ານພາສີຊາຍແດນ ເຊິ່ງກົມພາສີຄຸ້ມຄອງນໍາໃຊ້ເປັນອັນສະເພາະ.

**10.3.4 ການຮັບຮອງການແຈ້ງ**

ພາຍຫຼັງ ສໍາເລັດການກວດກາຢູ່ແຕ່ລະຂັ້ນຕອນຕາມການບໍລິຫານຄວາມສ່ຽງ ແລະ ການແຈ້ງໄດ້ຖືກ

ປ່ຽນເປັນສະຖານະພາບຄວາມສ່ຽງຕໍ່າ(ຊ່ອງສີຂຽວ), ຫົວໜ້າ ຫຼື ຮອງຫົວໜ້າຈຸງານ ສາມາດຮັບຮອງການແຈ້ງຕາມຄວາມຮັບຜິດຊອບຂອງຕົນ ຄື:

- ກໍລະນີການແຈ້ງພາສີສະແດງຜົນເປັນທີ່ຄວາມສ່ຽງຕໍ່າ ແລະ ຄວາມສ່ຽງປານກາງ ແມ່ນມອບໃຫ້ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງພາສີເປັນຜູ້ຮັບຮອງ.
- ສໍາລັບການແຈ້ງທີ່ມີຄວາມສ່ຽງສູງ ແມ່ນມອບໃຫ້ຫົວໜ້າ ຫຼື ຮອງຫົວໜ້າຈຸງານກວດກາສິນຄ້າເປັນຜູ້ຮັບຮອງ.
- ກໍລະນີເປັນການກະທໍາຜິດ ເຊິ່ງເອກະສານແຈ້ງພາສີຖືກສົ່ງມາຈາກເຈົ້າໜ້າທີ່ກວດກາຂໍ້ມູນເບື້ອງຕົ້ນ, ເຈົ້າໜ້າທີ່ກວດກາເອກະສານລະອຽດ ຫຼື ເຈົ້າໜ້າທີ່ກວດກາສິນຄ້າຕົວຈິງ, ແມ່ນມອບໃຫ້ຫົວໜ້າ ຫຼື ຮອງຫົວໜ້າຈຸງານສອບຖາມ ແລະ ສະສາງ ເປັນຜູ້ຮັບຮອງພາຍຫຼັງການສະສາງຄະດີ ແລະ ດັດແກ້ຂໍ້ມູນໃຫ້ຖືກຕ້ອງແລ້ວ.
- ການຮັບຮອງການແຈ້ງແມ່ນສາມາດດໍາເນີນການໄດ້ ພາຍຫຼັງສິນຄ້າມາຮອດດ່ານຕົວຈິງ ແລະ ຜູ້ແຈ້ງພາສີຍື່ນເອກະສານແຈ້ງພາສີຕົ້ນສະບັບໃຫ້ແກ່ເຈົ້າໜ້າທີ່ພາສີ.

**10.3.5 ການຊໍາລະຄ່າພາສີ ແລະ ພັນທະອື່ນ**

ພາຍຫຼັງ ເອກະສານແຈ້ງພາສີຖືກຮັບຮອງແລ້ວ, ຜູ້ແຈ້ງພາສີ ຕ້ອງດໍາເນີນການຊໍາລະຄ່າພາສີ ແລະ ພັນທະອື່ນ ດັ່ງນີ້:

- ດ່ານພາສີທີ່ນໍາໃຊ້ລະບົບSmart Tax, ເຈົ້າໜ້າທີ່ບັນຊີ ເອີ້ນຂໍ້ມູນໃບແຈ້ງຂຶ້ນມາກວດກາ ຖ້າເຫັນວ່າໃບແຈ້ງພາສີຜ່ານການຮັບຮອງແລ້ວ ໃຫ້ຮັບຊໍາລະໂດຍນໍາໃຊ້ໂປຣແກຣມ Smart Tax ທີ່ທະນາຄານຕິດຕັ້ງໃຫ້ແກ່ດ່ານພາສີ. ການຊໍາລະແມ່ນໃຫ້ດໍາເນີນການພ້ອມກັນຄັ້ງດຽວ ເຊິ່ງລວມເອົາ ຄ່າພາສີ, ຄ່າອາກອນ ແລະ ພັນທະອື່ນ ກ່ຽວຂ້ອງ ໂດຍປະຕິບັດຕາມບົດແນະນໍາຂອງກະຊວງການເງິນ ກ່ຽວກັບການຄຸ້ມຄອງນໍາໃຊ້ລະບົບດັ່ງກ່າວ.
- ສໍາລັບດ່ານທີ່ບໍ່ມີລະບົບ Smart Tax ແມ່ນໃຫ້ຊໍາລະຄ່າທໍານຽມການແຈ້ງ ນໍາເຈົ້າໜ້າທີ່ພາສີ, ສ່ວນຄ່າພາສີ ແລະ ພັນທະອື່ນ ແມ່ນຊໍາລະນໍາເຈົ້າໜ້າທີ່ຄັງເງິນແຫ່ງຊາດ ຫຼື ຊໍາລະຜ່ານທະນາຄານ. ພາຍຫຼັງ ຊໍາລະແລ້ວ ຕ້ອງຍື່ນເອກະສານຫຼັກຖານການຊໍາລະໃຫ້ແກ່ເຈົ້າໜ້າທີ່ຄັງເງິນປະຈໍາດ່ານ ເພື່ອລົງບັນທຶກບັນຊີການຊໍາລະຜ່ານໂມດູນການຊໍາລະໃນລະບົບອາຊີກູດາ.

**10.3.6 ການອະນຸມັດປ່ອຍສິນຄ້າ (Release Order)**

ພາຍຫັງສໍາເລັດຂັ້ນຕອນການຊໍາລະຄ່າພາສີ ແລະ ພັນທະອື່ນແລ້ວ ຕ້ອງສົ່ງເອກະສານທັງໝົດໃຫ້ຫົວໜ້າ ຫຼື ຮອງຫົວໜ້າດ່ານ ພິຈາລະນາອະນຸມັດ. ຫົວໜ້າ ຫຼື ຮອງຫົວໜ້າດ່ານ ເປັນຜູ້ກວດກາເອກະສານແຈ້ງພາສີ ແລະ ການຢັ້ງຢືນການຊໍາລະສະສາງທັງໝົດເປັນຄັ້ງສຸດທ້າຍ. ເພື່ອຄວາມແນ່ໃຈຕໍ່ຄວາມຖືກຕ້ອງຂອງຂໍ້ມູນ ແລະ ເອກະສານແຈ້ງພາສີ, ຫົວໜ້າ ຫຼື ຮອງຫົວໜ້າດ່ານ ສາມາດເຂົ້າກວດກາເບິ່ງຂໍ້ມູນການແຈ້ງໃນລະບົບອາຊີກູດາ ໂດຍນໍາໃຊ້ລະຫັດຜູ້ນໍາໃຊ້ລະບົບອາຊີກູດາຂອງຕົນເອງ.

ຫຼັງຈາກກວດກາແລ້ວ ໃຫ້ປະຕິບັດດັ່ງນີ້:

- **ຖ້າບໍ່ພົບເຫັນຄວາມຜິດ**: ແມ່ນໃຫ້ອະນຸມັດປ່ອຍສິນຄ້າ ໂດຍການເຊັນໃສ່ຫ້ອງ 54 ໃນໃບແຈ້ງພາສີເປັນລາຍລະອຽດ ແລະ ຈ້ຳກາຢ່າງຖືກຕ້ອງ.
- **ຖ້າພົບເຫັນຄວາມຜິດ**: ແມ່ນໃຫ້ສົ່ງເອກະສານໃຫ້ເຈົ້າໜ້າທີ່ສອບຖາມ ແລະ ສະສາງ ເພື່ອເຮັດບົດບັນທຶກການກະທຳຜິດ. ຈາກນັ້ນ ຈຶ່ງສົ່ງເອກະສານໃຫ້ຫົວໜ້າ ຫຼື ຮອງຫົວໜ້າດ່ານພິຈາລະນາ ອະນຸມັດປ່ອຍສິນຄ້າອອກດ່ານກ່ອນ ແລະ ສົ່ງເອກະສານທັງໝົດໃຫ້ກອງກວດກາພາສີແຂວງ, ນະຄອນຫຼວງ ດຳເນີນຂັ້ນຕອນການກວດກາ ແລະ ກວດສອບຫຼັງການແຈ້ງພາສີຕາມໝວດທີ 1 ພາກທີ X ຂອງກົດໝາຍວ່າດ້ວຍພາສີ.

10.4 ຂັ້ນຕອນທີ 4: ການປ່ອຍສິນຄ້າ (Exit Control)

- ພາຍຫຼັງ ຫົວໜ້າ ຫຼື ຮອງຫົວໜ້າດ່ານພາສີເຊັນອະນຸມັດໃບແຈ້ງ, ຜູ້ແຈ້ງພາສີຕ້ອງນຳເອກະສານທັງໝົດ *ໄປແຈ້ງຕໍ່ເຈົ້າໜ້າພາສີຄຸ້ມຄອງສາງສິນຄ້າ ເພື່ອດຳເນີນການຕິດຕາມການຂົນສິນຄ້າຂຶ້ນລົດ* ບັນທຸກ ແລະ ນຳອອກຈາກສາງ ຫຼື ດ່ານພາສີ ຢ່າງຖືກຕ້ອງ.
- ເຈົ້າໜ້າທີ່ຄຸ້ມຄອງສາງສິນຄ້າ ເອີ້ນຂໍ້ມູນການແຈ້ງໃນລະບົບອາຊິກຸດາຂຶ້ນມາ ເພື່ອປະກອບຂໍ້ມູນໃສ່ໃບປ່ອຍສິນຄ້າ (Exit Note), ແລະ ຢືນຢັນຄວາມຖືກຕ້ອງໃນລະບົບ ເພື່ອເປັນການຢັ້ງຢືນວ່າສິນຄ້າ ໄດ້ຖືກປ່ອຍອອກຈາກສາງ ຫຼື ດ່ານພາສີ ຢ່າງຖືກຕ້ອງ.

*ການແຈ້ງພາສີຂາເຂົ້າຕ້ອງດຳເນີນຕາມລຳດັບຂັ້ນຕອນທີ່ໄດ້ລະບຸຂ້າງເທິງຢ່າງເຂັ້ມງວດ. ຖ້າຜູ້ປະກອບການ, ເຈົ້າ*ໜ້າທີ່ພາສີ ຫຼື ດ່ານພາສີຊາຍແດນ ບໍ່ປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ ແມ່ນຈະຖືກປະຕິບັດມາດຕະການຕາມລະບຽບກົດໝາຍ.

**11. ການແຈ້ງພາສີຂາອອກ**

ການແຈ້ງພາສີຂາອອກ ຕ້ອງດຳເນີນຕາມຂັ້ນຕອນ ດັ່ງລຸ່ມນີ້:

**11.1 ຂັ້ນຕອນທີ 1: ການປະກອບຂໍ້ມູນ ແລະ ເອກະສານແຈ້ງພາສີເປັນລາຍລະອຽດ**

**11.1.1 ການປະກອບຂໍ້ມູນໃສ່ໃບແຈ້ງພາສີ:**

ການປະກອບຂໍ້ມູນໃບແຈ້ງພາສີຂາອອກ ແມ່ນໃຫ້ດຳເນີນການຄືກັນກັບການແຈ້ງພາສີຂາເຂົ້າທີ່ກຳນົດໄວ້ໃນຂໍ້ 10.2.1 ຂອງບົດແນະນຳສະບັບນີ້.

**11.1.2 ການຄັດຕິດເອກະສານປະກອບການແຈ້ງ:**

- ພາຍຫຼັງ ສຳເລັດການປະກອບຂໍ້ມູນແລ້ວ, ຜູ້ແຈ້ງພາສີຕ້ອງໄດ້ສະແກນ (scan) ເອກະສານປະກອບເພື່ອຄັດຕິດເປັນເອກະສານເອເລັກໂຕຣນິກໃນຮູບແບບ pdf, png ຫຼື jpeg. ເອກະສານປະກອບການແຈ້ງພາສີເປັນລາຍລະອຽດ ມີດັ່ງນີ້:
    - ໃບແຈ້ງລາຄາ
    - ໃບລາຍການຫຸ້ມຫໍ່ສິນຄ້າ
    - ໃບຢັ້ງຢືນແຫຼ່ງກຳເນີດ (ຖ້າມີ)
    - ໃບອະນຸຍາດຈາກຂະແໜງການລັດທີ່ກ່ຽວຂ້ອງ (ກໍລະນີເປັນສິນຄ້າລັດຄວບຄຸມ)
    - ໃບຢັ້ງຢືນການມອບພັນທະອື່ນ
    - ໃບມອບສິດ (ຖ້າເປັນການແຈ້ງພາສີດ້ວຍຜູ້ບໍລິການແຈ້ງພາສີ)

- ເອກະສານປະກອບການແຈ້ງພາສີ ຕ້ອງແຈ້ງຊັດເຈນ, ສາມາດອ່ານໄດ້ງ່າຍ ແລະ ມີເນື້ອໃນຄົບຖ້ວນຕາມເອກະສານຕົ້ນສະບັບ. ຂະໜາດຂອງໄຟລ໌ ແມ່ນບໍ່ໃຫ້ໃຫຍ່ກວ່າ 500 Kbຕໍ່ 1 ເອກະສານ.

### 11.1.3 ການຢັ້ງຢືນຄວາມຖືກຕ້ອງໃບແຈ້ງພາສີ

ຫຼັງຈາກສຳເລັດການປະກອບຂໍ້ມູນຢ່າງຄົບຖ້ວນແລ້ວ ຜູ້ແຈ້ງພາສີ ຕ້ອງພິມໃບແຈ້ງພາສີທີ່ໄດ້ລົງທະບຽນແລ້ວ ອອກຈາກລະບົບອາຊີກູດາ ໂດຍນຳໃຊ້ແບບພິມທີ່ລັດຖະການພາສີພິມຈຳໜ່າຍ ພ້ອມທັງລົງລາຍເຊັນ ແລະ ຈ້ຳກາ ໃສ່ຫ້ອງ 54 ຢ່າງຖືກຕ້ອງ. ຊື່ຜູ້ແຈ້ງພາສີໃນຫ້ອງ 14 ແລະ ຫ້ອງ 54 ຕ້ອງແມ່ນຜູ້ດຽວກັນ. ກໍລະນີຜູ້ສົ່ງອອກສິນຄ້າເປັນຜູ້ແຈ້ງພາສີເອງ ຊື່ຜູ້ສົ່ງອອກໃນຫ້ອງ 2 ຕ້ອງກົງກັບຊື່ຜູ້ແຈ້ງພາສີໃນຫ້ອງ 14 ແລະ ຜູ້ລົງລາຍເຊັນໃນຫ້ອງ 54. ກໍລະນີ ເປັນການແຈ້ງພາສີດ້ວຍຜູ້ບໍລິການແຈ້ງພາສີ ຫ້ອງ 2 ໃຫ້ລະບຸຊື່ຜູ້ສົ່ງອອກ (ເຈົ້າຂອງສິນຄ້າ ຫຼື ຜູ້ຮັບສິນຄ້າ), ສ່ວນຫ້ອງ 14 ແລະ 54 ແມ່ນໃສ່ຊື່ຜູ້ບໍລິການແຈ້ງພາສີ.

### 11.1.4 ການລົງທະບຽນ ແລະ ການຍື່ນເອກະສານແຈ້ງພາສີ

ການລົງທະບຽນ ແລະ ການຍື່ນເອກະສານແຈ້ງພາສີຂາອອກ ແມ່ນໃຫ້ດຳເນີນການຄືກັນກັບຂັ້ນຕອນການແຈ້ງພາສີຂາເຂົ້າ ທີ່ກຳນົດໄວ້ໃນຂໍ້ 10.2.4 ຂອງບົດແນະນຳສະບັບນີ້.

## 11.2 ຂັ້ນຕອນທີ 2: ການກວດກາ ແລະ ຄວບຄຸມຂອງເຈົ້າໜ້າທີ່ພາສີ

### 11.2.1 ການຢືນຢັງການລົງທະບຽນໃບແຈ້ງພາສີ

ການຢືນຢັນການລົງທະບຽນໃບແຈ້ງພາສີຂາອອກ ແມ່ນໃຫ້ດຳເນີນການຄືກັນກັບການແຈ້ງພາສີຂາເຂົ້າ ທີ່ກຳນົດໄວ້ໃນຂໍ້ 10.3.1 ຂອງບົດແນະນຳສະບັບນີ້.

### 11.2.2 ການກວດກາຂໍ້ມູນ, ເອກະສານ ແລະ ການກວດກາສິນຄ້າຕົວຈິງ

ການຄວບຄຸມກວດກາຕ້ອງປະຕິບັດຕາມລະດັບຄວາມສ່ຽງ ດັ່ງນີ້:

**ກ. ກໍລະນີເປັນການແຈ້ງທີ່ມີຄວາມສ່ຽງຕ່ຳ**

- ເຈົ້າໜ້າທີ່ພາສີ ຕ້ອງດຳເນີນການກວດກາຂໍ້ມູນການແຈ້ງເບື້ອງຕົ້ນ ໂດຍສຸມໃສ່ກວດກາເອກະສານປະກອບການແຈ້ງພາສີ (ໃບແຈ້ງລາຄາ, ໃບລາຍການຫຸ້ມຫໍ່,ໃບອະນຸຍາດ ແລະ ອື່ນໆ), ຊື່ ຜູ້ແຈ້ງພາສີ ຫຼື ຜູ້ບໍລິການແຈ້ງພາສີ, ການໃຫ້ນະໂຍບາຍດ້ານພາສີ ແລະ ອື່ນໆ.
- ກໍລະນີໄດ້ຮັບເອກະສານແຈ້ງພາສີຕົ້ນສະບັບແລ້ວ ໃຫ້ກວດກາຄວາມຖືກຕ້ອງຂອງການເຊັນຢັ້ງຢືນ ແລະ ປະທັບກາ. ກໍລະນີ ເປັນການແຈ້ງສົ່ງອອກຕາມແຜນອະນຸຍາດສົ່ງອອກ ໃຫ້ເຈົ້າໜ້າທີ່ຄຸ້ມຄອງກວດກາໂດຍສົມທຽບໃສ່ໃບອະນຸຍາດຂອງຂະແໜງການກ່ຽວຂ້ອງ.
- ພາຍຫຼັງສຳເລັດການກວດກາຂໍ້ມູນເບື້ອຕົ້ນ ຕ້ອງປະຕິບັດ ດັ່ງນີ້:
    - **ຖ້າບໍ່ພົບຄວາມຜິດ:** ເຈົ້າໜ້າທີ່ກວດກາຂໍ້ມູນການແຈ້ງເບື້ອງຕົ້ນ ຕ້ອງຕື່ມຂໍ້ມູນໃສ່ໃບຕິດຕາມເອກະສານ ແລ້ວສົ່ງເອກະສານໃຫ້ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງພິຈາລະນາ. ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງ ສາມາດເຂົ້າໄປກວດກາຂໍ້ມູນໃນລະບົບ ຖ້າບໍ່ພົບຄວາມຜິດ ໃຫ້ດຳເນີນການຮັບຮອງການແຈ້ງໃນລະບົບ, ພ້ອມທັງລົງລາຍ

ເຊັນ ແລະ ຈ້ຳກາຊີ່ ໃນຫ້ອງ 54 ໃນໃບແຈ້ງພາສີເປັນລາຍລະອຽດ . ການຮັບຮອງການແຈ້ງສາມາດດຳເນີນການໄດ້ພາຍຫຼັງໄດ້ຮັບເອກະສານແຈ້ງພາສີຕົ້ນສະບັບເທົ່ານັ້ນ.

- **ຖ້າພົບເຫັນຄວາມຜິດ:** ໃຫ້ປ່ຽນສະຖານະພາບການແຈ້ງ ໄປເປັນການສອບຖາມ ແລະ ສະສາງ, ບັນທຶກຜົນການກວດພົບເຫັນຄວາມຜິດລົງໃນໃບບັນທຶກຜົນການກວດກາ (Inspection Act), ຕື່ມຂໍ້ມູນໃສ່ໃບຕິດຕາມເອກະສານ ແລ້ວສົ່ງໃຫ້ເຈົ້າໜ້າທີ່ ສອບຖາມ ແລະ ສະສາງ ດຳເນີນການ.

**ຂ. ກໍລະນີເປັນການແຈ້ງທີ່ມີຄວາມສ່ຽງປານກາງ**

ເຈົ້າໜ້າທີ່ພາສີ ຕ້ອງດຳເນີນການກວດກາຂໍ້ມູນ ແລະ ເອກະສານແຈ້ງພາສີຢ່າງລະອຽດ ໂດຍສຸມໃສ່ກວດກາການຈັດລະຫັດສິນຄ້າ, ການກຳນົດມູນຄ່າແຈ້ງພາສີ, ການອະນຸຍາດຂອງຂະແໜງການກ່ຽວຂ້ອງ ແລະ ອື່ນໆ.

ພາຍຫຼັງສຳເລັດການກວດກາແລ້ວ ໃຫ້ດຳເນີນການ ດັ່ງນີ້:

- **ຖ້າບໍ່ພົບເຫັນຄວາມຜິດ:** ເຈົ້າໜ້າທີ່ກວດກາເອກະສານ ຕ້ອງຢັ້ງຢືນຄວາມຖືກຕ້ອງໃນລະບົບອາຊີກູດາ ແລ້ວສົ່ງໃຫ້ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງພິຈາລະນາ. ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງ ສາມາດຈະເຂົ້າໄປກວດກາຂໍ້ມູນໃນລະບົບ ຖ້າບໍ່ພົບຄວາມຜິດ ແມ່ນໃຫ້ຊີ້ນຳເຈົ້າໜ້າທີ່ກວດກາເອກະສານປ່ຽນເປັນສະຖານະພາບການແຈ້ງເປັນຄວາມສ່ຽງຕ່ຳ. ຈາກນັ້ນຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງດຳເນີນການຮັບຮອງການແຈ້ງໃນລະບົບ, ພ້ອມທັງລົງລາຍເຊັນ ແລະ ຈ້ຳກາຊີ່ ໃນຫ້ອງ 54 ໃນໃບແຈ້ງພາສີເປັນລາຍລະອຽດ (ຫ້ອງ 54). ການຮັບຮອງການແຈ້ງສາມາດດຳເນີນການໄດ້ພາຍຫຼັງໄດ້ຮັບເອກະສານແຈ້ງພາສີຕົ້ນສະບັບເທົ່ານັ້ນ.
- **ຖ້າພົບເຫັນຄວາມຜິດ** ເຊັ່ນ: ການຈັດລະຫັດສິນຄ້າ, ການກຳນົດມູນຄ່າແຈ້ງພາສີ, ໃບອະນຸຍາດ, ໃບທະບຽນວິສາຫະກິດ ຫຼື ອື່ນໆ ບໍ່ຖືກຕ້ອງ, ເຈົ້າໜ້າທີ່ພາສີ ຕ້ອງປ່ຽນເປັນສະຖານະພາບການແຈ້ງໄປເປັນການສອບຖາມ ແລະ ສະສາງ ພ້ອມທັງບັນທຶກຜົນການກວດກາລົງໃນແບບຟອມບັນທຶກການກວດກາ (Inspection Act) ໃນລະບົບອາຊີກູດາ ແລະ ໃຫ້ສົ່ງເອກະສານທັງໝົດ ໃຫ້ຈຸງານສອບຖາມ ແລະ ສະສາງ ເປັນຜູ້ດຳເນີນການ.
- **ກໍລະນີມີຂໍ້ສົງໄສ** ເຊັ່ນ: ຜູ້ນຳເຂົ້າ ບໍ່ເຄີຍນຳເຂົ້າສິນຄ້າປະເພດນີ້ມາກ່ອນ, ເອກະສານມີຮ່ອງຮອຍການດັດແປງ ຫຼື ອື່ນໆ ຕ້ອງແຈ້ງໃຫ້ຜູ້ແຈ້ງພາສີສະໜອງຂໍ້ມູນ ແລະ ເອກະສານເພີ່ມເຕີມ ເຊັ່ນ: ສັນຍາຊື້-ຂາຍສິນຄ້າ, ໃບທະບຽນວິສາຫະກິດ ແລະ ອື່ນໆ.

ຜ່ານການກວດກາຂໍ້ມູນ ແລະ ເອກະສານເພີ່ມເຕີມ ຫາກເຫັນວ່າໜ້າເຊື່ອຖື ແລະ ສາມາດຮັບເອົາໄດ້ ແມ່ນໃຫ້ດຳເນີນການຢັ້ງຢືນຄວາມຖືກຕ້ອງໃນລະບົບອາຊີກູດາ ແລ້ວສົ່ງໃຫ້ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງພິຈາລະນາຮັບຮອງ.

ຖ້າກວດກາແລ້ວຍັງບໍ່ມີຄວາມຊັດເຈນ ແລະ ພິຈາລະນາແລ້ວເຫັນວ່າ ຄວນມີການກວດກາສິນຕົວຈິງເພື່ອໃຫ້ແນ່ໃຈວ່າສິນຄ້າທີ່ນຳເຂົ້ານັ້ນຖືກຕ້ອງຕາມການແຈ້ງຕົວຈິງ ຫຼື ບໍ່, ເຈົ້າໜ້າທີ່ກວດກາເອກະສານ ນຳສະເໜີຕໍ່ຫົວໜ້າ ຫຼື ຮອງຫົວໜ້າຈຸງານຄຸ້ມຄອງການແຈ້ງ

ພິຈາລະນາ. ພາຍຫຼັງພິຈາລະນາແລ້ວ ຖ້າຫົວໜ້າ ຫຼື ຮອງຫົວໜ້າຈຸງານດັ່ງກ່າວ ເຫັນວ່າ ຄວນດຳເນີນການກວດກາສິນຄ້າຕົວຈິງ ແມ່ນໃຫ້ຊີ້ນຳເຈົ້າໜ້າທີ່ກວດກາເອກະສານ ດຳເນີນ ການປ່ຽນເປັນຄວາມສ່ຽງສູງ ແລະ ບັນທຶກຂໍ້ສັງໃສຈາການກວດກາລົງໃນແບບຟອມບັນທຶກ ການກວດກາ (Inspection Act) ໃນລະບົບອາຊິກູດາ ແລະ ສົ່ງເອກະສານທັງໝົດໃຫ້ເຈົ້າ ໜ້າທີ່ກວດກາສິນ ຄ້າ ເພື່ອດຳເນີນການກວດກາສິນຄ້າຕົວຈິງ.

ຄ. **ກໍລະນີເປັນການແຈ້ງທີ່ມີຄວາມສ່ຽງສູງ**

ການແຈ້ງພາສີທີ່ມີຄວາມສ່ຽງສູງ ຕ້ອງຜ່ານການກວດກາທັງ 2 ລະດັບຄື ກວດກາເອກະສານ ແຈ້ງພາສີຢ່າງລະອຽດ ແລະ ກວດກາສິນຄ້າຕົວຈິງ.

- **ການກວດກາເອກະສານ**: ເຈົ້າໜ້າທີ່ພາສີ ຕ້ອງດຳເນີນການກວດກາຂໍ້ມູນ ແລະ ເອກະສານ ແຈ້ງພາສີຢ່າງລະອຽດ. ພາຍຫຼັງສຳເລັດການກວດກາແລ້ວ ໃຫ້ດຳເນີນການ ດັ່ງນີ້:
  - **ຖ້າບໍ່ພົບເຫັນຄວາມຜິດ**: ເຈົ້າໜ້າທີ່ກວດກາເອກະສານ ຕ້ອງຢັ້ງຢືນຄວາມຖືກຕ້ອງໃນ ລະບົບອາຊິກູດາ ແລ້ວສົ່ງໃຫ້ເຈົ້າໜ້າທີ່ກວດກາສິນຄ້າເພື່ອດຳເນີນການກວດກາສິນຄ້າຕົວ ຈິງ.
  - **ຖ້າພົບເຫັນຄວາມຜິດ** ເຊັ່ນ: ການຈັດລະຫັດສິນຄ້າ, ໃບອະນຸຍາດ, ໃບທະບຽນວິສາຫະ ກິດ ຫຼື ອື່ນໆ ບໍ່ຖືກຕ້ອງ, ເຈົ້າໜ້າທີ່ກວດກາເອກະສານຕ້ອງບັນທຶກຜົນການກວດກາລົງ ໃນແບບຟອມບັນທຶກການກວດກາ (Inspection Act) ໃນລະບົບອາຊິກູດາ ແລ້ວສົ່ງ ໃຫ້ເຈົ້າໜ້າທີ່ກວດກາສິນຄ້າ ດຳເນີນການກວດກາສິນຄ້າຕົວຈິງ. ຫຼັງຈາກສຳເລັດການ ກວດກາສິນຄ້າຕົວຈິງ ແລະ ບັນທຶກຜົນການກວດກາສິນຄ້າຕົວຈິງແລ້ວ ໃຫ້ສົ່ງເອກະສານ ທັງໝົດ ໃຫ້ຈຸງານສອບຖາມ ແລະ ສະສາງ ເປັນຜູ້ດຳເນີນການ.
- **ການກວດກາສິນຄ້າຕົວຈິງ**: ພາຍຫຼັງລະບົບອາຊິກູດາໄດ້ສະແດງຜົນເປັນຄວາມສ່ຽງເປັນຄວາມ ສ່ຽງສູງແຕ່ເບື້ອງຕົ້ນ ຫຼື ມີການປ່ຽນຈາກຄວາມສ່ຽງປານກາງ ມາເປັນຄວາມສ່ຽງສູງ, ລະບົບ ອາຊິກູດາ ຈະດຳເນີນການຄັດເລືອກເຈົ້າໜ້າທີ່ກວດກາສິນຄ້າ ແບບອັດຕະໂນມັດ ໂດຍນຳໃຊ້ ຫຼັກການສຸ່ມຄັດເລືອກ. ເຈົ້າໜ້າທີ່ ທີ່ໄດ້ຮັບການຄັດເລືອກໂດຍລະບົບອາຊິກູດາ ຕ້ອງດຳເນີນ ການກວດກາສິນຄ້າຕົວຈິງທັນທີ ໂດຍສຸມໃສ່ກວດກາ ປະເພດ, ຊະນິດ, ລຸ້ນ, ຍີ່ຫໍ້, ນ້ຳໜັກ, ຂະໜາດ, ຈຳນວນ, ລັກສະນະການຫຸ້ມຫໍ່ ແລະ ລັກສະນະທາງກາຍະພາບອື່ນໆ. ການ ກວດກາສິນຄ້າຕົວຈິງຕ້ອງດຳເນີນຊ້ອງໜ້າຜູ້ແຈ້ງພາສີ.

ເຈົ້າໜ້າທີ່ກວດກາສິນຄ້າ ສາມາດນຳໃຊ້ເຄື່ອງຄອມພິວເຕີທີ່ຕິດຕັ້ງໃຫ້ຈຸງານຄຸ້ມຄອງສາງສິນຄ້າ, ຄອມພິວເຕີແບບພົກພາ (Laptop) ຫຼື ແທບເບລດ ທີ່ກົມພາສີປະກອບໃຫ້ ເພື່ອບັນທຶກຜົນ ການກວດກາ. ພາຍຫຼັງ ກວດກາແລ້ວຕ້ອງປະຕິບັດດັ່ງນີ້:

- **ຖ້າບໍ່ພົບເຫັນຄວາມຜິດ**: ເຈົ້າໜ້າທີ່ກວດກາສິນຄ້າຕົວຈິງຕ້ອງຢັ້ງຢືນຄວາມຖືກຕ້ອງໃນລະບົບ ອາຊິກູດາ. ຈາກນັ້ນ, ສົ່ງເອກະສານໃຫ້ຫົວໜ້າ ຫຼື ຮອງຫົວໜ້າຈຸງານກວດກາສິນຄ້າ ພິຈາລະນາ. ຫົວໜ້າ ຫຼື ຮອງຫົວໜ້າຈຸງານກວດກາສິນຄ້າ ເຂົ້າໄປກວດກາຂໍ້ມູນໃນລະບົບ ຖ້າ ເຫັນດີຕາມການກວດກາຂອງເຈົ້າໜ້າທີ່ກວດກາ ແມ່ນໃຫ້ຊີ້ນຳເຈົ້າໜ້າທີ່ກວດກາສິນຄ້າ ປ່ຽນ

ສະຖານະພາບເປັນການແຈ້ງຄວາມສ່ຽງຕໍ່າ ແລະ ຫົວໜ້າ ຫຼື ຮອງຫົວໜ້າຈຸງານກວດກາສິນຄ້າ ດໍາເນີນການຮັບຮອງການແຈ້ງໃນລະບົບ, ພ້ອມທັງລົງລາຍເຊັນ ແລະ ຈ້ໍາກາຊື່ ໃນຫ້ອງ 54 ໃນໃບແຈ້ງພາສີເປັນລາຍລະອຽດ.

- **ຖ້າພົບເຫັນຄວາມຜິດ** ເຊັ່ນ: ຂໍ້ມູນການແຈ້ງດ້ານຈໍານວນ, ຂະໜາດ, ນໍ້າໜັກ, ລຸ້ນ, ຍີ່ຫໍ້ ບໍ່ກົງກັບສິນຄ້າຕົວຈິງ, ເຈົ້າໜ້າທີ່ກວດກາສິນຄ້າຕົວຈິງຕ້ອງປ່ຽນສະຖານະພາບການແຈ້ງໄປເປັນການສອບຖາມ ແລະ ສະສາງ, ພ້ອມທັງບັນທຶກຜົນການກວດກາລົງໃນແບບຟອມບັນທຶກການກວດກາ (Inspection Act) ໃນລະບົບອາຊີກູດາ. ຈາກນັ້ນ ຕ້ອງສົ່ງເອກະສານທັງໝົດໃຫ້ເຈົ້າໜ້າທີ່ສອບຖາມ ແລະ ສະສາງ ເປັນຜູ້ດໍາເນີນ.

**11.2.4 ການຮັບຮອງການແຈ້ງ**

ການຮັບຮອງການແຈ້ງພາສີຂາອອກ ແມ່ນໃຫ້ດໍາເນີນການຄືກັນກັບການແຈ້ງພາສີຂາເຂົ້າທີ່ກໍານົດໄວ້ໃນຂໍ້ 10.3.4 ຂອງບົດແນະນໍາສະບັບນີ້.

**11.2.5 ການຊໍາລະຄ່າພາສີ ແລະ ພັນທະອື່ນ**

ການຊໍາລະຄ່າພາສີ ແລະ ພັນທະອື່ນສໍາລັບການແຈ້ງພາສີຂາອອກ ແມ່ນໃຫ້ປະຕິບັດຄືກັນກັບການແຈ້ງພາສີຂາເຂົ້າທີ່ກໍານົດໄວ້ໃນຂໍ້ 10.3.5 ຂອງບົດແນະນໍາສະບັບນີ້.

**11.2.6 ການອະນຸມັດການແຈ້ງ**

ການອະນຸມັດການແຈ້ງພາສີຂາອອກ ແມ່ນໃຫ້ປະຕິບັດຄືກັນກັບການແຈ້ງພາສີຂາເຂົ້າ ທີ່ກໍານົດໄວ້ໃນຂໍ້ 10.3.6 ຂອງບົດແນະນໍາສະບັບນີ້.

**11.3 ຂັ້ນຕອນທີ 3:** ການປ່ອຍສິນຄ້າ

ການດໍາເນີນຂັ້ນຕອນການປ່ອຍສິນຄ້າສໍາລັບການແຈ້ງພາສີຂາອອກ ແມ່ນໃຫ້ປະຕິບັດຄືກັນກັບການແຈ້ງພາສີຂາເຂົ້າ ທີ່ກໍານົດໄວ້ໃນຂໍ້ 10.4 ຂອງບົດແນະນໍາສະບັບນີ້.

ການແຈ້ງພາສີຂາອອກ ຕ້ອງດໍາເນີນຕາມລໍາດັບຂັ້ນຕອນທີ່ໄດ້ລະບຸຂ້າງເທິງຢ່າງເຂັ້ມງວດ. ຖ້າຜູ້ປະກອບການ, ເຈົ້າໜ້າທີ່ພາສີ ຫຼື ດ່ານພາສີຊາຍແດນ ບໍ່ປະຕິບັດຕາມຂັ້ນຕອນທີ່ກໍານົດໄວ້ ແມ່ນຈະຖືກປະຕິບັດມາດຕະການຕາມລະບຽບກົດໝາຍ.

## 12. ການສອບຖາມ ແລະ ສະສາງ

**12.1 ການສອບຖາມຂໍ້ມູນ**

ໃນເວລາປະກອບຂໍ້ມູນ ແລະ ເອກະສານແຈ້ງພາສີ, ຜູ້ປະກອບການ ສາມາດຂໍຄໍາແນະນໍາ ຈາກເຈົ້າໜ້າທີ່ສອບຖາມ ແລະ ສະສາງ ໄດ້. ແຕ່ຄໍາແນະນໍາດັ່ງກ່າວ ເປັນການໃຫ້ຂໍ້ມູນເບື້ອງຕົ້ນເທົ່ານັ້ນ ເຊິ່ງບໍ່ມີຜົນສັກສິດທາງດ້ານກົດໝາຍ. ໃນກໍລະນີ ຜູ້ແຈ້ງພາສີຕ້ອງການຄໍາຢັ້ງຢືນຢ່າງເປັນລາຍລັກອັກສອນ ແລະ ມີຜົນບັງຄັບໃຊ້ທາງກົດໝາຍ ແມ່ນຕ້ອງດໍາເນີນຂັ້ນຕອນສະເໜີການຢັ້ງຢືນຮັບຮອງລ່ວງໜ້າຢູ່ກົມພາສີ ກ່ອນດໍາເນີນຂັ້ນຕອນການແຈ້ງພາສີເປັນລາຍລະອຽດ ໂດຍປະຕິບັດຕາມມາດຕາ 28 ຂອງກົດໝາຍວ່າດ້ວຍພາສີ.

12.2 ການສະສາງຄະດີ

- ກໍລະນີ ຜົນການກວດກາຂໍ້ມູນ, ເອກະສານ ຫຼື ກວດກາສິນຄ້າຕົວຈິງ ໃນຂໍ້ 10 ແລະ 11 ຫາກພົບເຫັນການກະທຳຜິດ, ເອກະສານແຈ້ງພາສີຕ້ອງສົ່ງມາຫາຈຸງານສອບຖາມ ແລະ ສະສາງ. ເຈົ້າໜ້າທີ່ສອບຖາມ ແລະ ສະສາງ ຕ້ອງເຂົ້າໄປກວດກາປຶດບັນທຶກຜົນການກວດກາ (Inspection Act) ທີ່ບັນທຶກໂດຍເຈົ້າໜ້າທີ່ກວດກາແຕ່ລະຈຸດ. ຈາກນັ້ນ ຕ້ອງແຈ້ງຜົນການກວດກາໃຫ້ຜູ້ແຈ້ງພາສີຮັບຊາບ.
- ຜູ້ແຈ້ງພາສີສາມາດໃຫ້ຄຳຊີ້ແຈງ ແລະ ຍື່ນເອກະສານຫຼັກຖານເພີ່ມເຕີມໃຫ້ເຈົ້າໜ້າທີ່ພິຈາລະນາ. ພາຍຫຼັງກວດກາຂໍ້ມູນໃນລະບົບ ແລະ ຄົ້ນຄ້ວາເອກະສານເພີ່ມເຕີມແລ້ວເຈົ້າໜ້າທີ່ຕ້ອງສະເໜີຕໍ່ຫົວໜ້າ ຫຼື ຮອງຫົວໜ້າຈຸງານຂອງຕົນ ເພື່ອພິຈາລະນາຕັດສິນຕາມລະບຽບກົດໝາຍ.

12.3 ການດັດແກ້ຂໍ້ມູນການແຈ້ງ

- ຂໍ້ມູນ ແລະ ເອກະສານ ທີ່ຜູ້ແຈ້ງພາສີປະກອບໃສ່ໃບແຈ້ງພາສີໃນລະບົບອາຊີກຸດາ ຈະບໍ່ສາມາດດັດແກ້ ຫຼື ປັບປຸງ. ຍົກເວັ້ນ ເຈົ້າໜ້າທີ່ສອບຖາມ ແລະ ສະສາງເທົ່ານັ້ນ.
- ພາຍຫຼັງລົງທະບຽນໃບແຈ້ງແລ້ວ ຫາກຜູ້ແຈ້ງພາສີກວດເຫັນວ່າຕົນເອງປະກອບຂໍ້ມູນບໍ່ຖືກຕ້ອງ ໂດຍບໍ່ເຈຕະນາ, ຜູ້ແຈ້ງພາສີ ສາມາດສະເໜີຕໍ່ເຈົ້າໜ້າທີ່ພາສີ ເພື່ອພິຈາລະນາຕາມແຕ່ລະກໍລະນີ ດັ່ງນີ້:
  - ກໍລະນີ ໃບແຈ້ງພາສີທີ່ລົງທະບຽນແລ້ວ ແລະ ເຈົ້າໜ້າທີ່ພາສີ ໄດ້ຢືນຢັນການລົງທະບຽນໃບແຈ້ງແລ້ວແຕ່ບໍ່ທັນຜ່ານການກວດກາດ້ານຂໍ້ມູນເບື້ອງຕົ້ນ, ເຈົ້າໜ້າທີ່ພາສີ ສາມາດພິຈາລະນາດັດແກ້ຂໍ້ມູນການແຈ້ງໂດຍທັນທີ ແລ້ວແຈ້ງໃຫ້ຜູ້ແຈ້ງພາສີປະກອບເອກະສານ ແລະ ດຳເນີນຂັ້ນຕອນການແຈ້ງພາສີຄືນໃໝ່ ໂດຍນຳໃຊ້ເລກທີໃບແຈ້ງເກົ່າ. ພາຍຫຼັງ ສຳເລັດການດັດແກ້, ເຈົ້າໜ້າທີ່ພາສີ ຕ້ອງບັນທຶກການດັດແກ້ ລົງໃນປຶດບັນທຶກການກວດກາ ຢ່າງລະອຽດ.
  - ກໍລະນີ ໃບແຈ້ງພາສີຫາກຖືກຢືນຢັນການລົງທະບຽນການແຈ້ງ ແລະ ເຈົ້າໜ້າທີ່ພາສີໄດ້ເລີ່ມກວດກາຂໍ້ມູນເບື້ອງຕົ້ນໄປແລ້ວ, ເຈົ້າໜ້າທີ່ພາສີ ສາມາດດຳເນີນຄະດີຕາມຂໍ້ກຳນົດໃນຂໍ້ 12.2 ຂ້າງເທິງ.
- ພາຍຫຼັງສຳເລັດການສະສາງຄະດີ, ເຈົ້າໜ້າທີ່ສອບຖາມ ແລະ ສະສາງ ຕ້ອງດັດແກ້ຂໍ້ມູນໃນໃບແຈ້ງພາສີ ໃຫ້ຖືກຕ້ອງ ພ້ອມທັງ ແຈ້ງໃຫ້ຜູ້ແຈ້ງພາສີພິມໃບແຈ້ງທີ່ຖືກດັດແກ້ແລ້ວ ເພື່ອລົງລາຍເຊັນ ແລະ ຈ້ຳກາຄືນໃໝ່.
- ຫຼັງຈາກຜູ້ແຈ້ງພາສີຍື່ນເອກະສານແຈ້ງພາສີສະບັບໃໝ່ທີ່ຖືກດັດແກ້ແລ້ວ, ເຈົ້າໜ້າທີ່ຕ້ອງບັນທຶກການສະສາງໃນແບບຟອມບັນທຶກການກວດກາ (Inspection Act) ໃນລະບົບອາຊີກຸດາແລ້ວສົ່ງໃຫ້ຫົວໜ້າຫຼືຮອງຫົວໜ້າຈຸງານຂອງຕົນພິຈາລະນາ. ຫົວໜ້າຫຼືຮອງຫົວໜ້າຈຸງານສອບຖາມແລະສະສາງກວດກາແລະຊີ້ນຳເຈົ້າໜ້າທີ່ປ່ຽນສະຖານະພາບເປັນການແຈ້ງຄວາມສ່ຽງຕໍ່າ(ຊ່ອງສີຂຽວ). ພາຍຫຼັງເຈົ້າໜ້າທີ່ປ່ຽນສະຖານະພາບເປັນຄວາມສ່ຽງຕໍ່າແລ້ວໃຫ້ຫົວໜ້າຫຼືຮອງຫົວໜ້າຈຸງານສອບຖາມ ແລະ ສະສາງ ຮັບຮອງການແຈ້ງໃນລະບົບ, ພ້ອມທັງລົງລາຍເຊັນ ແລະ ຈ້ຳກາຊື່ ໃນຫ້ອງ 54 ໃນໃບແຈ້ງພາສີເປັນລາຍລະອຽດ.
- ກໍລະນີ ຜູ້ແຈ້ງພາສີບໍ່ພໍໃຈຕໍ່ຄຳຕັດສິນຂອງເຈົ້າໜ້າທີ່ສອບຖາມ ແລະ ສະສາງ, ສາມາດດຳເນີນການສະເໜີ ຄືນ ຕາມໝວດທີ 2, ພາກທີ X ຂອງກົດໝາຍວ່າດ້ວຍພາສີ.

13. **ການແຈ້ງພາສີລ່ວງໜ້າ**

- ກໍລະນີ ຜູ້ແຈ້ງພາສີມີຂໍ້ມູນ ແລະ ເອກະສານຄົບຖ້ວນ, ແມ່ນສາມາດດໍາເນີນການແຈ້ງພາສີເປັນລາຍລະອຽດກ່ອນສິນຄ້າມາຮອດດ່ານ ໂດຍປະຕິບັດຕາມລໍາດັບຂັ້ນຕອນທີ່ກໍານົດໃນຂໍ້ 10 ຫຼື 11 ຂ້າງເທິງ.
- ພາຍຫຼັງ ເອກະສານແຈ້ງພາສີໄດ້ຮັບການລົງທະບຽນເຂົ້າໃນລະບົບ, ເຈົ້າໜ້າທີ່ພາສີສາມາດດໍາເນີນການກວດກາຂໍ້ມູນ ແລະ ເອກະສານປະກອບທັນທີ. ຫຼັງຈາກ ສໍາເລັດການກວດກາຂໍ້ມູນ ແລະ ເອກະສານປະກອບແລ້ວ ຕ້ອງໄດ້ລໍຖ້າເອກະສານຕົ້ນສະບັບກ່ອນ ຈຶ່ງດໍາເນີນການຮັບຮອງການແຈ້ງ.
- ກໍລະນີເປັນການແຈ້ງທີ່ມີຄວາມສ່ຽງສູງ ແມ່ນຕ້ອງລໍຖ້າສິນຄ້າມາຮອດດ່ານເພື່ອດໍາເນີນການກວດກາສິນຄ້າຕົວຈິງເສຍກ່ອນ ຈຶ່ງສາມາດຮັບຮອງການແຈ້ງໄດ້.
- ການແຈ້ງພາສີກ່ອນສິນຄ້າມາຮອດດ່ານ ສາມາດດໍາເນີນການໄດ້ພາຍໃນ ເຈັດວັນ ຕາມທີ່ໄດ້ກໍານົດໃນມາດຕາ 29 ຂອງກົດໝາຍວ່າດ້ວຍພາສີ. ຖ້າກາຍກໍານົດ ເຈັດວັນ ແຕ່ສິນຄ້າຍັງບໍ່ມາຮອດດ່ານ ແລະ ຜູ້ແຈ້ງພາສີບໍ່ນໍາເອົາເອກະສານແຈ້ງພາສີມາຍື່ນຕໍ່ເຈົ້າໜ້າທີ່ພາສີ. ລະບົບອາຊີກຸດາ ຈະແຈ້ງເຕືອນ ເຊິ່ງເຈົ້າໜ້າທີ່ພາສີ ປະຈໍາຈຸງານສອບຖາມ ແລະ ສະສາງ ຕ້ອງເອີ້ນຜູ້ແຈ້ງພາສີ ເຂົ້າມາສອບຖາມ. ຖ້າເຫັນວ່າເປັນການກະທໍາຜິດໂດຍເຈຕະນາ ຜູ້ແຈ້ງພາສີຈະຖືກປະຕິບັດມາດຕະການຕາມລະບຽບການ. ພາຍຫຼັງສະສາງແລ້ວ, ເຈົ້າໜ້າທີ່ຈຸງານສອບຖາມ ແລະ ສະສາງ ຕ້ອງລຶບລ້າງໃບແຈ້ງລ່ວງໜ້າດັ່ງກ່າວອອກຈາກລະບົບອາຊີກຸດາ.

14. **ການບັນທຶກຜົນການກວດກາ**

ເຈົ້າໜ້າທີ່ພາສີທີ່ປະຕິບັດໜ້າທີ່ກວດກາຂໍ້ມູນ, ກວດກາເອກະສານ, ກວດກາສິນຄ້າ, ສອບຖາມ ແລະ ສະສາງຄະດີ ຕ້ອງເປັນເຈົ້າການບັນທຶກຜົນການກວດກາລົງໃນ Inspection Act ຕາມຄວາມຮັບຜິດຊອບຂອງຕົນ. ຫ້າມເຈົ້າໜ້າທີ່ພາສີນໍາໃຊ້ລະຫັດຜູ້ນໍາໃຊ້ລະບົບອາຊີກຸດາຂອງຜູ້ອື່ນ ຫຼື ໃຫ້ຜູ້ອື່ນນໍາໃຊ້ລະຫັດຜູ້ນໍາໃຊ້ລະບົບຂອງຕົນເອງ ເພື່ອດໍາເນີນການບັນທຶກຜົນການກວດກາ. ຂໍ້ມູນກ່ຽວກັບການບັນທຶກຜົນການກວດກາ ຈະບໍ່ສາມາດດັດແກ້ໄດ້ ບໍ່ວ່າກໍລະນີໃດກໍ່ຕາມ.

15. **ພາສາທີ່ນໍາໃຊ້ໃນການແຈ້ງພາສີ**

ການປະກອບຂໍ້ມູນເຂົ້າໃນໃບແຈ້ງພາສີເປັນລາຍລະອຽດຕ້ອງເປັນ **ພາສາລາວ.** ເອກະສານປະກອບການແຈ້ງພາສີຕົ້ນຕໍ ເຊັ່ນ: ໃບແຈ້ງລາຄາ, ໃບລາຍການຫຸ້ມຫໍ່ສິນຄ້າ, ໃບຂົນສົ່ງສິນຄ້າ, ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ, ໃບອະນຸຍາດຈາກຂະແໜງການລັດທີ່ກ່ຽວຂ້ອງ, ສັນຍາຊື້-ຂາຍສິນຄ້າ, ໃບມອບສິດໃຫ້ດໍາເນີນການແຈ້ງພາສີ ຕ້ອງເປັນ**ພາສີລາວ ຫຼື ພາສາອັງກິດ**. ກໍລະນີເອກະສານຕົ້ນສະບັບເປັນພາສາອື່ນ ຕ້ອງໄດ້ແປເປັນ**ພາສາລາວ ຫຼື ພາສາອັງກິດ** ໂດຍມີການຢັ້ງຢືນຄວາມຖືກຕ້ອງຈາກຜູ້ໃຫ້ບໍລິການແປພາສາ ທີ່ເຄື່ອນໄຫວຖືກຕ້ອງຕາມກົດ ໝາຍ ພ້ອມທັງຄັດຕິດຕົ້ນສະບັບຂອງເອກະສານດັ່ງກ່າວໃຫ້ເຈົ້າໜ້າທີ່ກວດກາ. ຜູ້ແຈ້ງພາສີຕ້ອງຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃນການແປເອກະສານປະກອບການແຈ້ງພາສີ. ສໍາລັບ ເອກະສານປະກອບການແຈ້ງພາສີສໍາຮອງອື່ນໆ ອາດຈະເປັນພາສາຕ່າງປະເທດອື່ນໆໄດ້, ແຕ່ຖ້າມີຄວາມຈໍາເປັນ ເຈົ້າໜ້າທີພາສີສາມາດແຈ້ງໃຫ້ຜູ້ແຈ້ງພາສີແປເອກະສານດັ່ງກ່າວເປັນພາສາລາວ ຫຼື ພາສາອັງກິດ.

16. ການໃຫ້ບູລິມະສິດໃນການກວດປ່ອຍສິນຄ້າ

ລັດຖະການພາສີ ໃຫ້ບູລິມະສິດຕໍ່ການກວດປ່ອຍສິນຄ້າປະເພດ: ສັດມີຊີວິດ, ສິນຄ້າເນົ່າເປື່ອຍງ່າຍ, ເຊື່ອມຄຸນງ່າຍ, ສານເຄມີອັນຕະລາຍ, ສິນຄ້າບັນເທົາທຸກ, ສິນຄ້າຊ່ວຍເຫຼືອການຕ້ານພະຍາດລະບາດ ແລະ ສິນຄ້າທີ່ຕ້ອງເກັບຮັກສາດ້ວຍວິທີການສະເພາະ(ແຊ່ແຂງ ເປັນຕົ້ນ). ຜູ້ແຈ້ງພາສີ ທີ່ຕ້ອງການໃຫ້ເຈົ້າໜ້າທີ່ພາສີໃຫ້ບູລິມະສິດໃນການກວດປ່ອຍສິນຄ້າທີ່ລະບຸຂ້າງເທິງ ສາມາດນຳສະເໜີຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານເວລາສິນຄ້າມາຮອດດ່ານ ຫຼື ກ່ອນສິນຄ້າມາຮອດດ່ານ. ໃນກໍລະນີຈຳເປັນ ເຈົ້າໜ້າທີ່ພາສີ ອາດພິຈາລະນາປ່ອຍສິນຄ້າດັ່ງກ່າວອອກກ່ອນດ້ວຍການແຈ້ງໃນລະບອບຄ້ຳປະກັນຕາມມາດຕາ 27 ຂອງກົດໝາຍວ່າດ້ວຍພາສີ, ແລ້ວຈຶ່ງດຳເນີນການແຈ້ງພາສີເປັນລາຍລະອຽດເພື່ອສະສາງການແຈ້ງລະບອບຄ້ຳປະກັນຢ່າງຖືກຕ້ອງ ແລະ ທັນຕາມເວລາທີ່ກຳນົດໃນສັນຍາຄ້ຳປະກັນ.

17. ການນຳອອກຄືນ ຫຼື ນຳເຂົ້າຄືນ ສິນຄ້າທີ່ມີຄຸນລັກສະນະບໍ່ຖືກຕ້ອງຕາມການສັ່ງຊື້

17.1 ກໍລະນີເປັນການແຈ້ງພາສີຂາເຂົ້າ

ກໍລະນີ ສິນຄ້າຖືກຂົນສົ່ງມາຮອດດ່ານພາສີຊາຍແດນ ແລະ ໄດ້ແຈ້ງເອກະສານຂົນສົ່ງ ເຊິ່ງສິນຄ້າດັ່ງກ່າວ ໄດ້ຕົກເຂົ້າສູ່ການຄວບຄຸມຂອງລັດຖະການພາສີ. ກ່ອນດຳເນີນຂັ້ນຕອນການແຈ້ງພາສີເປັນລາຍລະອຽດ, ຫາກຜູ້ນຳເຂົ້າ ກວດກາສິນຄ້າແລ້ວພົບວ່າ ສິນຄ້ານັ້ນບໍ່ຖືກຄຸນລັກສະນະ(ສະເປັກ), ເສຍຄຸນ, ເຊື່ອມສະພາບ ຫຼື ຂາດຄຸນລັກສະໃດໜຶ່ງ ເຊິ່ງຜູ້ນຳເຂົ້າບໍ່ສາມາດຮັບເອົາໄດ້ ສາມາດດຳເນີນດັ່ງນີ້:

- ສົ່ງສິນຄ້າດັ່ງກ່າວ ອອກຄືນໃຫ້ແກ່ຜູ້ສົ່ງອອກ ພາຍໃນກຳນົດເວລາທີ່ລະບຸໃນມາດຕາ 24 ຂອງກົດໝາຍວ່າດ້ວຍພາສີ. ໂດຍເຮັດບົດບັນທຶກກັບດ່ານພາສີຊາຍແດນ ເພື່ອຢັ້ງຢືນການສົ່ງອອກຄືນ.
- ສະເໜີຕໍ່ລັດຖະການພາສີມອບໃຫ້ເປັນກຳມະສິດຂອງລັດ.
- ສະເໜີຕໍ່ລັດຖະການພາສີ ແລະ ຂະແໜງການກ່ຽວຂ້ອງ ເພື່ອທຳລາຍຖິ້ມ.
- ສະເໜີຕໍ່ລັດຖະການພາສີ ເພື່ອປະມູນຂາຍອອກ ໂດຍປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີ ການແຈ້ງພາສີຖືກຮັບຮອງຢ່າງຖືກຕ້ອງ ແລະ ຊຳລະຄ່າພາສີ-ພັນທະອື່ນ ແລ້ວ, ເຈົ້າໜ້າທີ່ພາສີຈະບໍ່ຮັບພິຈາລະນາໃນການສົ່ງຄືນຄ່າພາສີ-ພັນທະອື່ນ.

17.2 ກໍລະນີເປັນການແຈ້ງພາສີຂາອອກ

ພາຍຫຼັງສຳເລັດການດຳເນີນຂັ້ນຕອນການແຈ້ງພາສີເປັນລາຍລະອຽດ ແລະ ສິນຄ້າໄດ້ສົ່ງອອກຈາກອານາເຂດພາສີ ສປປ ລາວ, ຫາກຜູ້ນຳເຂົ້າສິນຄ້າ ກວດກາສິນຄ້າແລ້ວພົບວ່າ ສິນຄ້ານັ້ນບໍ່ຖືກສະເປັກ, ເສຍຄຸນ, ເຊື່ອມສະພາບ ຫຼື ຂາດຄຸນລັກສະໃດໜຶ່ງ ເຊິ່ງຕ້ອງໄດ້ສົ່ງສິນຄ້າດັ່ງກ່າວກັບຄືນ ສປປ ລາວ, ຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:

- ຜູ້ແຈ້ງພາສີຕ້ອງນຳເອົາຫຼັກຖານດ້ານເອກະສານທີ່ຢັ້ງຢືນໂດຍລັດຖະການພາສີປະເທດນຳເຂົ້າ ມາຍື່ນຕໍ່ດ່ານພາສີ ບ່ອນແຈ້ງສົ່ງອອກ.
- ເຈົ້າໜ້າທີ່ພາສີ ດຳເນີນການກວດກາເອກະສານ ແລະ ສິນຄ້າຕົວຈິງ ຖ້າເຫັນວ່າສົມເຫດສົມຜົນ ຈຶ່ງອະນຸຍາດໃຫ້ນຳເຂົ້າຄືນ. ເຈົ້າໜ້າທີ່ຈູງານສອບຖາມ ແລະ ສະສາງ ສົມທົບກັບເຈົ້າໜ້າທີ່ກວດກາ

ສິນຄ້າຕົວຈິງ ບັນທຶກຜົນການກວດກາເພີ່ມເຕີມ ໃນລະບົບອາຊີກຸດາ ພ້ອມທັງຄັດຕິດເອກະສານກ່ຽວຂ້ອງໄວ້ເປັນຫຼັກຖານ.

– ຖ້າຜູ້ແຈ້ງພາສີຕ້ອງການຂໍຄືນຄ່າພາສີ ແລະ ພັນທະອື່ນ ຕ້ອງນຳສະເໜີຕໍ່ກົມພາສີພິຈາລະນາ.

**18. ກໍລະນີເກີດເຫດສຸກເສີນ**

ໃນກໍລະນີເກີດເຫດສຸກເສີນ ເຊັ່ນ: ໄຟຟ້າດັບ, ສັນຍາເຄືອຄ່າຍໂທລະຄົມຫຼົ້ມ, ໄຟໄໝ້, ນ້ຳຖ້ວມ ແລະ ເຫດສຸດວິໄສອື່ນໆ ທີ່ພາໃຫ້ລະບົບອາຊີກຸດາ ບໍ່ສາມາດນຳໃຊ້ໄດ້ ແມ່ນໃຫ້ປະຕິບັດ ດັ່ງນີ້:

– ມອບໃຫ້ດ່ານພາສີຊາຍແດນທີ່ລະບົບອາຊີກຸດາເກີດບັນຫາຂັດຂ້ອງ ແຈ້ງສະພາບຂັດຂ້ອງໃຫ້ພະແນກເຕັກໂນໂລຊີ, ຂໍ້ມູນຂ່າວສານ ແລະ ແຜນການ ຮັບຊາບ ເພື່ອດຳເນີນການກວດກາ ແລະ ແກ້ໄຂບັນ ຫາໂດຍທັນທີ.

– ຖ້າພະແນກເຕັກໂນໂລຊີ, ຂໍ້ມູນຂ່າວສານ ແລະ ແຜນການ ບໍ່ສາມາດແກ້ໄຂບັນຫາທີ່ເກີດຂຶ້ນ ໄດ້ພາຍໃນ 1 ຊົ່ວໂມງ, ແມ່ນມອບໃຫ້ດ່ານພາສີປະຕິບັດ ດັ່ງນີ້:

  - ສຳລັບ ການແຈ້ງທີ່ໄດ້ຍື່ນໃບແຈ້ງພາສີເປັນລາຍລະອຽດ ແລະ ຢືນຢັນການລົງທະບຽນໃບແຈ້ງແລ້ວ ແມ່ນໃຫ້ດຳເນີນການກວດກາເອກະສານ, ກວດກາສິນຄ້າຕົວຈິງ ແລະ ປ່ອຍສິນຄ້າ ຖ້າເຫັນວ່າຖືກຕ້ອງ,ໂດຍບັນທຶກຜົນການກວດກາໃສ່ແບບຟອມທີ່ກຳນົດໃຫ້. ພ້ອມນັ້ນຜູ້ແຈ້ງພາສີຕ້ອງຖອກເງິນຄ່າພາສີ ແລະ ພັນທະອື່ນ ເຂົ້າບັນຊີລໍຖ້າຢູ່ຄັງເງິນແຫ່ງຊາດ ຫຼື ທະນາຄານ ປະຈຳດ່ານພາສີຊາຍແດນ ແລະ ສົ່ງໃບສັ່ງມອບໃຫ້ເຈົ້າໜ້າທີ່ພາສີເກັບໄວ້ເປັນຫຼັກຖານ. ພາຍຫຼັງລະບົບສາມາດນຳໃຊ້ໄດ້ປົກກະຕິ ໃຫ້ເຈົ້າໜ້າທີ່ແຕ່ລະຈຸດ ບັນທຶກຜົນການກວດກາລົງໃນລະບົບ, ຊຳລະຄ່າພາສີ ແລະ ພັນທະອື່ນຕາມຂັ້ນຕອນ ແລະ ເກັບຮັກສາເອກະສານບັນທຶກການກວດກາ (ທີ່ເປັນເຈ້ຍ) ໄວ້ເປັນຫຼັກຖານເພື່ອການກວດສອບ.
  - ສຳລັບ ການແຈ້ງທີ່ບໍ່ທັນໄດ້ຍື່ນເອກະສານແຈ້ງພາສີ ແມ່ນໃຫ້ລໍຖ້າຈົນກວ່າລະບົບຈະໄດ້ຮັບການແກ້ໄຂ ແລະ ສາມາດນຳໃຊ້ໄດ້ປົກກະຕິ.

– ກໍລະນີ ບໍ່ສາມາດແກ້ໄຂບັນຫາຂັດຂ້ອງຂອງລະບົບໄດ້ ພາຍໃນ 24 ຊົ່ວໂມງ, ມອບໃຫ້ດ່ານພາສີດຳເນີນຂັ້ນຕອນການແຈ້ງດ້ວຍວິທີທົ່ວໄປ ໂດຍນຳໃຊ້ແບບຟອມທີ່ລັດຖະການພາສີກຳນົດໃຫ້. ພາຍຫຼັງລະບົບສາມາດນຳໃຊ້ໄດ້ປົກກະຕິ ຜູ້ແຈ້ງພາສີ ແລະ ເຈົ້າໜ້າທີ່ພາສີ ຕ້ອງໄດ້ເຂົ້າຂໍ້ມູນໃນລະບົບຄືນຕາມໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນໃນແຕ່ລະຂັ້ນຕອນ. ກົມພາສີ ຈະອອກລະບຽບການ ໃນການຄຸ້ມຄອງການແຈ້ງພາສີດ້ວຍວິທີທົ່ວໄປ ເປັນອັນສະເພາະ.

**19. ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກການກົມພາສີ, ກອງກວດກາພາສີແຂວງ, ນະຄອນຫຼວງ ແລະ ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ ເປັນເຈົ້າການຝຶກອົບຮົມ, ເຜີຍແຜ່, ແນະນຳ ໃຫ້ເຈົ້າໜ້າທີ່ພາສີ ແລະ ຜູ້ປະກອບການເຂົ້າໃຈຢ່າງທົ່ວເຖິງ ແລະ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງມີປະສິດທິຜົນສູງ.

ມອບໃຫ້ດ່ານພາສີຊາຍແດນ ເອົາໃຈໃສ່ຄຸ້ມຄອງ ແລະ ດຳເນີນຂັ້ນຕອນການແຈ້ງພາສີ ຢ່າງເປັນລະບົບລະບຽບ, ເຊີດຊູນ້ຳໃຈບໍລິການຮັບໃຊ້ປະຊາຊົນດ້ວຍຄວາມສັດຊື່ບໍລິສຸດ, ເພີ່ມທະວີການຈັດເກັບລາຍຮັບເຂົ້າງົບປະມານຢ່າງຖືກຕ້ອງ ແລະ ຮັບປະກັນການຈັດຕັ້ງປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ.

ມອບໃຫ້ຜູ້ແຈ້ງພາສີ ເປັນເຈົ້າການຈັດຕັ້ງປະຕິບັດບົດແນະນຳສະບັບນີ້ ຢ່າງເຂັ້ມງວດ.

ບົດແນະນຳສະບັບນີ້ ໃຊ້ປ່ຽນແທນບົດແນະນຳກົມພາສີພາສີ ສະບັບເລກທີ 10503/ກພສ, ລົງວັນທີ 05 ກໍລະກົດ 2012, ຄຳແນະນຳເພີ່ມເຕີມກົມພາສີ ສະບັບເລກທີ 03471/ກພສ, ລົງວັນທີ 15 ມັງກອນ 2013. ບັນດາລະບຽບການຂອງກົມພາສີ ທີ່ຂັດກັບບົດແນະນຳສະບັບນີ້ລ້ວນແຕ່ຖືກລົບລ້າງ. ບົດແນະນຳສະບັບນີ້ມີຜົນສັກສິດນັບວັນທີ 01 ມີນາ 2017 ເປັນຕົ້ນໄປ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ

**ບ່ອນສົ່ງ:**

- ທ່ານລັດຖະມົນຕີ ແລະ ຮອງລັດຖະມົນຕີ ທ່ານລະ 1 ສະບັບ "ເພື່ອລາຍງານ"
- ພະແນກການກົມພາສີ ພະແນກລະ 1 ສະບັບ "ເພື່ອປະຕິບັດ"
- ດ່ານພາສີສາກົນທົ່ວປະເທດ ດ່ານລະ 1 ສະບັບ "ເພື່ອປະຕິບັດ"
- ກອງກວດກາພາສີແຂວງ, ນະຄອນຫຼວງ ກອງລະ 1 ສະບັບ "ເພື່ອປະຕິບັດ"